# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ................................................ 1

II. ການເຄືອນໄຫວຂອງ ຄະນະນໍາ ຄຕພ........................................................................................ 8

III. ການເຄື່ອນໄຫວຂອງ 3 ອົງການຈັດຕັ້ງມະຫາຊົນ ຄະນະພົວພັນຕ່າງປະເທດສູນກາງພັກ. ............................ 14


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ເດືອນ ມິຖຸນາ - ກໍລະກົດ 2024**


**ສໍານັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 3/06/2024, ຫ້ອງວ່າການສູນກາງພັກ ໄດ້ຈັດພິທີປະກາດຂໍ້ຕົກລົງຂອງກົມການເມືອງ ວ່າດ້ວຍ ການຍົກຍ້າຍ ແລະ ມອບຮັບໜ້າທີ່ ສະຫາຍ ພົມໂທ ຫງວຽນ ຢຸຍ ງ໋ອກ, ກຳມະການສູນກາງພັກ, ກຳມະການຄະນະປະຈຳຄະນະພັກຕຳຫຼວດສູນກາງ, ຮອງລັດຖະມົນຕີກະຊວງຕຳຫຼວດ ເປັນຫົວໜ້າຫ້ອງວ່າການສູນກາງພັກກອມມູນິດຫວຽດນາມແທນສະຫາຍ ເລມິງ ຮຶງ, ເລຂາທິການສູນກາງພັກ ທີ່ຖືກແຕ່ງຕັ້ງເປັນຫົວໜ້າຄະນະຈັດຕັ້ງສູນກາງພັກກອມມູນິດຫວຽດນາມ. ວັນທີ 6/6/2024, ກອງປະຊຸມຄັ້ງທີ 7 ຂອງສະພາແຫ່ງຊາດຫວຽດນາມ ໄດ້ຮັບຮອງການແຕ່ງຕັ້ງໃຫ້ ສະຫາຍ ເລແທັງລ່ອງ, ລັດຖະມົນຕີກະຊວງຍຸຕິທຳເປັນຮອງນາຍົກລັດຖະມົນຕີ ແລະ ເລືອກຕັ້ງ ສະຫາຍ ຫງວຽນຄໍ່ແທັ່ງ ກຳມະການສູນກາງພັກຄອມມູນິດຫວຽດນາມ ຫົວໜ້າຄະນະກຳມະການວຽກງານສະມາຊິກສະພາແຫ່ງຊາດຫວຽດນາມ ເປັນຮອງປະທານສະພາແຫ່ງຊາດຫວຽດນາມ.

ວັນທີ 11-12/07/2024, ສະຫາຍ ໂຕເລິມ, ປະທານປະເທດຫວຽດນາມ ໄດ້ຢ້ຽມຢາມລັດຖະກິດ ສປປ ລາວ ສອງຝ່າຍໄດ້ລົງນາມເອກະສານ ຈຳນວນ 07 ສະບັບ, ມີ ສັນຍາລະຫວ່າງລັດຖະບານ ຈຳນວນ 03 ສະບັບ ແລະ ສັນຍາພາກທຸລະກິດ 04 ສະບັບ. ການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ການລົງທຶນຂອງສອງປະເທດ ນັບມື້ຂະຫຍາຍຕົວ, ມູນຄ່າການຄ້າສອງຝ່າຍ ບັນລຸ 1.46 ຕື້ໂດລາສະຫະລັດ ໃນປີ 2023 ແລະ ຫຼາຍກວ່າ 620 ລ້ານໂດລາສະຫະລັດໃນໄລຍະ 4 ເດືອນ ຕົ້ນປີ 2024, ເພີ່ມຂຶ້ນ 10.6% ຖ້າທຽບກັບໄລຍະດຽວກັນຂອງປີ 2023.

ວັນທີ 15/7/2024, ຫວຽດນາມ ໄດ້ເປີດກອງປະຊຸມການປະຕິຮູບດ້ານບໍລິຫານລັດ ຄັ້ງທີ 8 ທີ່ປະຊຸມຮຽກຮ້ອງໃຫ້ປະຕິບັດ “5 ບາດກ້າວບຸກທະລຸ” ຄື: 1. ຍູ້ແຮງການກວດກາ ແລະ ລຶບລ້າງບັນດາສິ່ງກີດຂວາງໃນບັນດາສະຖາບັນ, ກົນໄກ, ນະໂຍບາຍເພື່ອປະກອບສ່ວນລະດົມແຫຼ່ງກຳລັງ ສັງຄົມ, ປະຊາຊົນ, ວິສາຫະກິດ ແລະ ຕ່າງປະເທດ ເພື່ອການພັດທະນາ; 2.ຍູ້ແຮງການປຶກສາຫາລື ແລະ ແກ້ໄຂບັນດາບັນຫາທີ່ເກີດຂຶ້ນ, ຄວາມຫຍຸ້ງຍາກຂາດເຂີນຂອງປະຊາຊົນ ແລະ ວິສາຫະກິດ, ໂດຍສະເພາະກ່ຽວກັບລະບຽບການບໍລິຫານ ເພື່ອຂະຫຍາຍການຜະລິດ ແລະ ດຳເນີນທຸລະກິດ ແລະ ສ້າງຊີວິດການເປັນຢູ່ຂອງປະຊາຊົນ; 3.ຍູ້ແຮງລະບຽບວິໄນ, ຕ້ານການສໍ້ລົນ; 4.ຍູ້ແຮງການຫັນເປັນດິຈິຕອນ, ກໍ່ສ້າງລັດຖະບານດິຈິຕອນ, ສັງຄົມດິຈິຕອນ, ພົນລະເມືອງດິຈິຕອນ, ບັນທຶກຂໍ້ມູນຖານຂໍ້ມູນເປັນດິຈິຕອນ ເພື່ອປະກອບສ່ວນປັບປຸງປະສິດທິພາບ ແລະ ບຸກທະລຸໃນການເຊື່ອມໂຍງລະຫວ່າງບັນດາອົງການຫົວໜ່ວຍທ້ອງຖິ່ນ ໃນການຊອກຄົ້ນ ແລະ ແບ່ງປັນຂໍ້ມູນ; 5.ສົ່ງເສີມການຊຳລະ ແລະ ທຸລະກຳທາງການເງິນທີ່ບໍ່ແມ່ນເງິນສົດ ທຸກຂະແໜງການ, ການຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ສຸມໃສ່ການເບີກຈ່າຍເງິນລົງທຶນພາກລັດ, ໂຄງການເປົ້າໝາຍແຫ່ງຊາດ, ສູ້ຊົນບັນລຸອັດຕາການເບີກຈ່າຍໃຫ້ໄດ້ 95% ໃນປີນີ້.

ວັນທີ 19/7/2024, ສສ.ຫວຽດນາມ ໄດ້ອອກແຈ້ງການວ່າ: ສະຫາຍ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ຫງວຽນ ຝູຈ້ອງ ໄດ້ເຖິງແກ່ມໍລະນະກຳ. ໃນເວລາ 1 ໂມງ 38 ນາທີ ຂອງວັນທີ 19/7/2024 ແລະ ຫວຽດນາມ ຈັດການໄວ້ອາໄລລະດັບຊາດ ເປັນເວລາ 2 ວັນ ແຕ່ວັນທີ 25-26 /7/2024 ແລະ ສົບຂອງເພິ່ນຈະຝັງໄວ້ທີ່ສຸສານແຫ່ງຊາດ, ເລກທີ 5, ຖະໜົນເຈີ່ນແທງຕົງ, ຮ່າໂນ້ຍ.

ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ.ລາວ ໄດ້ນຳພາຄະນະຜູ້ແທນຂັ້ນສູງພັກ-ລັດ ໄປເຂົ້າຮ່ວມພິທີໄວ້ອາໄລພິທີງານສົບຂອງ ສະຫາຍ ຫງວຽນ ຝູຈ້ອງ ຢູ່ ຮ່າໂນ້ຍໃນເວລາດັ່ງກ່າວ.

### 2) ພັກກອມມູນິດຈີນ

ວັນທີ 6/6/2024, ທີ່ນະຄອນຫຼວງປັກກິ່ງ, ສປ.ຈີນ, ກຽກກິດສະຖານ ແລະ ອຸດສະເບກິດສະຖານ ໄດ້ລົງນາມສັນຍາລະຫວ່າງລັດຖະບານ 3 ປະເທດ ກ່ຽວກັບໂຄງການກໍ່ສ້າງທາງລົດໄຟຈີນ-ກຽກກິດສະຖານ-ອຸດສະເບກິດສະຖານ ເປັນໜຶ່ງໃນໂຄງການ “ໜຶ່ງແລວໜຶ່ງເສັ້ນທາງ” ຂອງຈີນ ເຊື່ອມລະຫວ່າງຈີນ ໄປຍັງອາຊີກາງ ເລີ່ມຈາກເມືອງຄັສຮາ (kashar) ຂອງຈີນ, ຜ່ານປະເທດກຽກກິດສະຖານ ແລ້ວເຂົ້າສູ່ດິນແດນອຸດສະເບກິດສະຖານ. ຄວາມຍາວທັງໝົດ 523

km ຜ່ານຈີນ 213 km, ຜ່ານກຽກກິດສະຖານ 260 km ແລະ ຜ່ານອຸດສະເບກິສະຖານ 50 km, ຖ້າໂຄງການດັ່ງກ່າວສຳເລັດຈະເຮັດໄດ້ໄລຍະທາງຂົນສົ່ງ ທາງບົກລະຫວ່າງ 3 ປະເທດຫຼຸດລົງ 900 km, ປະຢັດເວລາ 7-8 ຊົ່ວໂມງ.

ວັນທີ 28/6/2024, ສປ.ຈີນ ໄດ້ຈັດພິທີສະເຫຼີມສະຫຼອງ ຄົບຮອບ 70 ປີ (1954-2024) ຂອງ 5 ຫຼັກການຢູ່ຮ່ວມກັນໂດຍສັນຕິ, ມີຜູ້ເຂົ້າຮ່ວມ 600 ກວ່າຄົນ. ທ່ານ ສີ ຈິ້ນຜິງ ປະທານປະເທດຈີນ ໄດ້ກ່າວວ່າ: 5 ຫຼັກການຢູ່ຮ່ວມກັນໂດຍສັນຕິ ແມ່ນຄວາມສຳເລັດທີ່ຍິ່ງໃຫຍ່ ໃນປະຫວັດສາດຂອງການພົວພັນສາກົນ; ການສະເຫຼີມສະຫຼອງໃນມື້ນີ້ ແມ່ນເພື່ອສານຕໍ່ຫຼັກການດັ່ງກ່າວ ດ້ວຍການສ້າງສະມາຄົມອະນາຄົດຮ່ວມກັນຂອງປະຊາຊາດ ເພື່ອຄວາມເຂັ້ມແຂງແກ່ມວນມະນຸດພວກເຮົາ. ທ່ານ ສີ ຍັງໄດ້ປະກາດຈະສ້າງສູນວິໄຈ “Global south" ໂດຍສະໜອງທຶນການສຶກສາ 1,000 ທຶນ; ຈັດຝຶກອົບຮົມ 100,000 ຊຸດ ໃນ 5 ປີຕໍ່ໜ້າ ແລະ ຈັດໂຄງການຜູ້ນຳລຸ້ນໜຸ່ມ ສຳລັບບັນດາປະເທດໃນຊີກໂລກໃຕ້.

ໃນລະຫວ່າງວັນທີ 15-18/7/2024, ຄະນະກຳມະການສູນກາງພັກກອມມູນິດຈີນ ຊຸດທີ 20 ໄດ້ດຳເນີນກອງປະຊຸມຄົບຄະນະ ຄັ້ງທີ 3 ຢູ່ນະຄອນຫຼວງປັກກິ່ງ. ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຈີນ ໄດ້ມີຄຳເຫັນ ແລະ ຊີ້ແຈງກ່ຽວກັບຮ່າງມະຕິຂອງຄະນະກຳມະການສູນກາງພັກກອມມູນິດຈີນ ໃນການປະຕິຮູບຢ່າງຮອບດ້ານ ແລະ ກ້າວໄປເຖິງການທັນເປັນທັນສະໄໝຂອງຈີນ ໂດຍມີເນື້ອໃນວ່າ: ສຸມໃສ່ ຄົ້ນຄວ້າລົງເລິກບັນຫາການປະຕິຮູບ ແລະ ຊຸກຍູ້ຄວາມທັນສະໄໝແບບຈີນ, ວາງແຜນເພື່ອລົງເລິກ ການປະຕິຮູບຢ່າງຮອບດ້ານ ໂດຍປິ່ນອ້ອມຄວາມທັນສະໄໝແບບຈີນ; ການເປີດປະຕູສູ່ພາຍນອກແມ່ນພື້ນຖານ ເພື່ອໃຫ້ຈີນ ມີຄວາມສະຫງົບ ແລະ ໝັ້ນຄົງບົນເສັ້ນທາງປະຕິຮູບ. ໃນຂະບວນການປະຕິຮູບ ແລະ ເປີດກວ້າງການພົວພັນລະຫວ່າງ ຈີນກັບໂລກໄດ້ມີການປ່ຽນແປງຢ່າງກວ້າງຂວາງ ແລະ ເລິກເຊິ່ງ; ເສັ້ນທາງສາຍໄໝບູຮານທີ່ເຊື່ອມຕໍ່ຕາເວັນອອກ ແລະ ຕາເວັນຕົກ ເມື່ອ 2000 ກວ່າປີກ່ອນ, ປະຈຸບັນແມ່ນເສັ້ນທາງ “ໜຶ່ງແລວ ໜຶ່ງເສັ້ນທາງ”, ເພື່ອມະນຸດຊາດ ແລະ 3 ຂໍ້ລິເລີ່ມທີ່ສຳຄັນໃນທົ່ວໂລກ ໄດ້ຮັບຜົນສະທ້ອນຢ່າງກວ້າງຂວາງ, ຄຸນຄ່າທົ່ວໄປຂອງມວນມະນຸດລ້ວນແຕ່ໄດ້ຮັບຄວາມເຫັນດີເປັນເອກະສັນ.

### 3) ພັກກອມມູນິດກູບາ

ວັນທີ 4-5/7/2024, ໄດ້ຈັດກອງປະຊຸມຄົບຄະນະບໍລິຫານງານສູນກາງພັກກອມມູນິດກູບາ ຄັ້ງທີ 8 ສະໄໝທີ 8 ໂດຍການເປັນປະທານຂອງ ສະຫາຍ Miguel Díaz-Canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ສ.ກູບາ. ກອງປະຊຸມ ໄດ້ຕີລາຄາການຈັດຕັ້ງປະຕິບັດຂອງລັດຖະບານໃນການແກ້ໄຂ ແລະ ຟື້ນຟູເສດຖະກິດ ໃນ 6 ເດືອນຕົ້ນປີ 2024 ແລະ ການບັນລຸໝາກຜົນໃນການຜະລິດສະບຽງອາຫານ ແລະ ການສຶກສາດ້ານໂພສະນາການ; ໄດ້ປຶກສາຫາລືມາດຕະການປ້ອງກັນ ແລະ ຕ້ານການສໍ້ລາດບັງຫຼວງ, ອາຊະຍາກຳ, ການກະທຳທີ່ຜິດກົດໝາຍ, ການຜິດວິໄນອື່ນໆ ເພື່ອຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

### 4) ພັກແຮງງານເກົາຫຼີ

ວັນທີ 28/6-1/7/2024, ພັກແຮງງານເກົາຫຼີ ໄດ້ດຳເນີນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 10 ສະໄໝທີ 8 ໂດຍການເປັນປະທານຂອງສະຫາຍ ກິມເຈິງອຸນ, ເລຂາທິການໃຫ່ຍພັກແຮງງານເກົາຫຼີ. ກອງປະຊຸມໄດ້ປຶກສາຫາລື 5 ວາລະ ສຳຄັນຄື: ກວດກາຄືນການປະຕິບັດແນວທາງສຳຄັນຂອງພັກ, ລັດ ແລະ ມາດຕະການປີ 2024; ການປັບປຸງວິທີການ ແລະ ແບບແຜນວິທີເຮັດວຽກຂອງເຈົ້າໜ້າທີ່; ການປະຕິບັດວິໄນພະນັກງານໃນຂະແໜງການທີ່ສຳຄັນຢ່າງເຂັ້ມງວດ; ວຽກງານປັບປຸງລະບົບຕຸລາການ; ວຽກການຈັດຕັ້ງ. ກອງປະຊຸມຍັງໄດ້ຕີລາຄາການຈັດຕັ້ງປະຕິບັດວຽກງານຂອງພັກ ແລະ ລັດ ພົ້ນເດັ່ນ ໃນ 6 ເດືອນຕົ້ນປີ 2024 ຊຶ່ງໄດ້ເຮັດສຳເລັດ 12 ເປົ້າໝາຍທີ່ວາງໄວ້ ເປັນຕົ້ນແມ່ນ ຂະແໜງກະສິກຳ, ປູກຝັງແມ່ນໄດ້ຮັບໝາກຜົນຜະລິດເພີ່ມຈາກປີ 2023, ໂຄງການຊົນລະປະທານໃຫ່ຍ ແລະ ອື່ນໆ. ພ້ອມກັນນັ້ນ ໄດ້ເນັ້ນໜັກໃຫ້ເອົາໃຈໃສ່ໃນການປະຕິບັດແຜນການ 6 ເດືອນທ້າຍປີ ໂດຍສະເພາະ ການປະຕິບັດໂຄງການຜະລິດທີ່ທັນສະໄໝໃນ 20 ຕົວເມືອງ.

### 5) ການເລືອກຕັ້ງສະພາມົງໂກລີ

ວັນທີ 28/6/2024, ມົງໂກລີ ໄດ້ຈັດການເລືອກຕັ້ງສະມາຊິກສະພາຄູຣານໃຫຍ່ ຄັ້ງທີ 9 ທົ່ວປະເທດ ເພື່ອເລືອກເອົາສະມາຊິກສະພາ 126 ທ່ານ (ເພີ່ມຂຶ້ນຈາກ 76 ທ່ານ ເປັນ 126 ທ່ານ ຕາມການປັບປຸງ ລັດຖະທຳມະນູນ ໃນທ້າຍປີ

2023) ມີຜູ້ສະໝັກ 1,341 ຄົນ ໃນ 19 ພັກການເມືອງ, 2 ພັກຮ່ວມ ແລະ ຜູ້ລົງສະໝັກອິດສະຫຼະ ຈຳນວນໜຶ່ງ. ໃນນັ້ນ 48 ບ່ອນນັ່ງ ເລືອກເອົາຕົວແທນແບບອັດຕາສ່ວນ ແລະ 78 ບ່ອນນັ່ງ ເລືອກເອົາຈາກຄະແນນສຽງສ່ວນຫຼາຍ. ຜົນການເລືອກຕັ້ງ : ພັກປະຊາຊົນມົງໂກລີ (MPP), ພັກຂອງລັດຖະບານຊຸດປັດຈຸບັນ ໄດ້ສຽງ 35,01%, ກວມ 68 ບ່ອນນັ່ງ, ເພີ່ມຂຶ້ນ 6 ບ່ອນນັ່ງ ຖ້າທຽບໃສ່ການເລືອກຕັ້ງໃນປີ 2020; ພັກປະຊາທິປະໄຕ 30,14%, ກວມ 42 ບ່ອນນັ່ງ, ເພີ່ມຂຶ້ນ 31 ບ່ອນນັ່ງ; ພັກແຮງງານແຫ່ງຊາດ 10.38%, 8 ບ່ອນນັ່ງ (ປີ 2020 ບໍ່ໄດ້ຈັກບ່ອນນັ່ງ); ພັກແນວຮ່ວມແຫ່ງຊາດ 5.17%, ມີ 4 ບ່ອນນັ່ງ, ເພີ່ມຂຶ້ນ 3 ບ່ອນນັ່ງ; ພັກປະຊາທິປະໄຕສີຂຽວ 5.02% ແລະ ໄດ້ຮັບ 4/126 ບ່ອນນັ່ງ; ສ່ວນອີກ 14,3% ແມ່ນຈາກພັກການເມືອງອື່ນໆ.

**6) ການເລືອກຕັ້ງທົ່ວໄປຂອງ ສ.ອິນເດຍ.**

ການເລືອກຕັ້ງທົ່ວໄປຂອງອິນເດຍ ຈັດຂຶ້ນຕັ້ງແຕ່ວັນທີ 19/4/-1/6/2024, ມີຜູ້ປ່ອນບັດຕົວຈິງ 640 ລ້ານຄົນ ຈາກຜູ້ມີສິດປ່ອນບັດທັງໝົດ 968 ລ້ານຄົນ. ຜົນການເລືອກຕັ້ງ, ພັກປະຊາຊົນອິນເດຍ (Bharatiya Janata Party : BJP) ນຳໂດຍທ່ານ ໂມດີ, ນາຍົກລັດຖະມົນຕີ ຄົນປັດຈຸບັນຂອງອິນເດຍ ໄດ້ຮັບໄຊຊະນະ ກວມ 240 ບ່ອນນັ່ງ ໃນຈຳນວນ 543 ບ່ອນນັ່ງ ໃນສະພາ (ຫຼຸດລົງ 63 ບ່ອນນັ່ງ ທຽບໃສ່ການເລືອກຕັ້ງໃນປີ 2019) ແຕ່ຍັງບໍ່ຮອດ 272 ບ່ອນນັ່ງ ເຮັດໃຫ້ພັກ BJP ໄດ້ຮ່ວມກັບພັກອື່ນໃນການຈັດຕັ້ງລັດຖະບານ. ສ່ວນພັກການເມືອງຝ່າຍຄ້ານ (ພັກຄອງເກດ) ຍາດໄດ້ 99 ບ່ອນນັ່ງ ເພີ່ມຂຶ້ນ 47 ບ່ອນນັ່ງ.

**7) ການເລືອກຕັ້ງສະມາຊິກສະພາເອີຣົບ**

ໃນລະຫວ່າງ ວັນທີ 6-9/6/2024, ປະເທດສະມາຊິກ ອີຢູ 27 ປະເທດ ໄດ້ຈັດການເລືອກຕັ້ງສະມາຊິກລັດຖະສະພາເອີຣົບ (European Parliament) ຈຳນວນ 720 ບ່ອນນັ່ງ. ໂດຍມີປະຊາຊົນອອກມາໃຊ້ສິດປ່ອນບັດລົງຄະແນນສຽງ 51.1% ຂອງຈຳນວນປະຊາກອນທັງໝົດ 357 ລ້ານຄົນ, ເພີ່ມຂຶ້ນຈາກ 50.66% ໃນການເລືອກຕັ້ງປີ 2019, ຊຶ່ງຜົນຂອງການເລືອກຕັ້ງກຸ່ມພັກການເມືອງອະນຸລັກນິຍົມ ຫຼື ກຸ່ມພັກປະຊາຊົນ ອີຢູ (EPP) ນຳໂດຍ ທ່ານ ນາງ Ursula von der Leyen, ປະທານກຳມະການ EU ສາມາດຍາດໄດ້ 25.83% ຫຼື 186 ທີ່ນັ່ງໃນຈຳນວນ 720 ບ່ອນນັ່ງ (ຫຼຸດລົງ 01 ບ່ອນນັ່ງ); ກຸ່ມພັກສັງຄົມນິຍົມ ແລະ ປະຊາທິປະໄຕ (S&D), ຍາດໄດ້ 18,75% ຫຼື 135 ບ່ອນນັ່ງ (ຫຼຸດລົງ 13 ບ່ອນນັ່ງ); ກຸ່ມພັກຟື້ນຟູເອີຣົບ (Renew), ຍາດໄດ້ 10.97% ຫຼື 79 ບ່ອນນັ່ງ (ຫຼຸດລົງ 18 ບ່ອນນັ່ງ); ກຸ່ມພັກອະນຸລັກນິຍົມ ແລະ ປະຕິຮູບເອີຣົບ (ECR) ຍາດໄດ້ 10.14% ຫຼື 73 ບ່ອນນັ່ງ (ເພີ່ມຂຶ້ນ 11 ບ່ອນນັ່ງ); ກຸ່ມພັກກາງຂວາ (ID) ຍາດໄດ້ 8.06% ຫຼື 58 ບ່ອນນັ່ງ (ຫຼຸດລົງ 18 ບ່ອນນັ່ງ); ກຸ່ມພັກຂຽວ ຫຼື ພັກອະນຸລັກນິເວດວິທະຍາ ຍາດໄດ້ 7.36% ຫຼື 53 ບ່ອນນັ່ງ (ຫຼຸດລົງ 14 ບ່ອນນັ່ງ); ກຸ່ມພັກການເມືອງຝ່າຍຊ້າຍ ຍາດໄດ້ 5% ຫຼື 36 ບ່ອນນັ່ງ (ຫຼຸດລົງ 04 ບ່ອນນັ່ງ); ກຸ່ມພັກທີ່ບໍ່ຮ່ວມກຸ່ມພັກການເມືອງໃນສະພາເອີຣົບ (non-attached members) ຍາດໄດ້ 6.25% ຫຼື 45 ບ່ອນນັ່ງ (ຫຼຸດລົງ 12 ບ່ອນນັ່ງ) ແລະ ອື່ນໆ 7.64% ຫຼື 55 ບ່ອນນັ່ງ (ເພີ່ມຂຶ້ນ 55 ບ່ອນນັ່ງ). ໃນການເລືອກຕັ້ງຄັ້ງນີ້, ພັກການເມືອງຝ່າຍຂວາຈັດໃນບາງປະເທດ ໄດ້ຮັບບ່ອນນັ່ງໃນສະພາເພີ່ມຂຶ້ນ ໂດຍສະເພາະຢູ່ຝຣັ່ງ, ເຢຍລະມັນ, ອີຕາລີ, ໂຮນລັງ. ຈາກສະພາບການດັ່ງກ່າວ, ເຮັດໃຫ້ ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງ ໄດ້ປະກາດຫຍຸບສະພາແຫ່ງຊາດຂອງຝຣັ່ງ ແລະ ໄດ້ເລືອກຕັ້ງໃໝ່.

**8) ການເລືອກຕັ້ງສະພາແຫ່ງຊາດຝຣັ່ງ**

ທ່ານ Emmanuel Macron, ປະທານາທິບໍດີ ຝຣັ່ງ ປະກາດຍຸບສະພາ ໃນວັນທີ 9/6/2024 ແລະ ໄດ້ຈັດການເລືອກຕັ້ງທົ່ວໄປຮອບທຳອິດໃນວັນທີ 30/6/2024, ເພື່ອເລືອກເອົາສະມາຊິກສະພາແຫ່ງຊາດ ຈຳນວນ 577 ທ່ານ ຈາກ 577 ເຂດເລືອກຕັ້ງ. ຜົນການເລືອກຕັ້ງ ແມ່ນພັກຝ່າຍຂວາຈັດ ນຳໂດຍພັກແນວຮ່ວມແຫ່ງຊາດ National Rally (RN) ໄດ້ຄະແນນສຽງຂອງ 33,14% ຂອງບັດເລືອກຕັ້ງ; ພັກແນວໜ້າປະຊານິຍົມໃໝ່ NFP ໄດ້ຄະແນນ 28.5%, ສ່ວນພັກພັນທະມິດສາຍກາງ ນຳໂດຍພັກກຳເນີດໃໝ່ (Renaissance) ຂອງ ທ່ານ Emmanuel Macron, ປະທານາທິບໍດີ ຝຣັ່ງ ໄດ້ອັນດັບ 3, ດ້ວຍຄະແນນສຽງ 20.76%. ຈາກຜົນເລືອກຕັ້ງດັ່ງກ່າວ, ບໍ່ມີພັກການເມືອງໃດໄດ້ຮັບຄະແນນສຽງຫຼາຍກວ່າ 50% (ຫຼືຫຼາຍກວ່າ 289 ບ່ອນນັ່ງ). ສະນັ້ນ, ໄດ້ຈັດການເລືອກຕັ້ງຮອບ 02 ໃນວັນທີ 7/7/2024 ເຊິ່ງແມ່ນພັກແນວຮ່ວມປະຊານິຍົມໃໝ່ NFP, ເປັນພັກຝ່າຍຊ້າຍໄດ້ຊະນະດ້ວຍ 188 ບ່ອນນັ່ງ ໃນສະພາ (32.6%), ຮອງລົງມາແມ່ນ ພັກ

ກໍາເນີດໃໝ່ (Renaissance) ຂອງ ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງ ໄດ້ 161 ບ່ອນນັ່ງ (27.9%); ສ່ວນພັກແນວຮ່ວມແຫ່ງຊາດ National Rally (RN), ພັກຂວາຈັດ ໄດ້ 142 ບ່ອນນັ່ງ (24.6%). ເຫັນວ່າ ບໍ່ມີພັກໃດ ໄດ້ບ່ອນນັ່ງໃນສະພາເຖິງ 289 ບ່ອນນັ່ງຂຶ້ນໄປ. ສະນັ້ນ, ການຈັດຕັ້ງລັດຖະບານ ຈະປະກອບດ້ວຍຫຼາຍພັກການເມືອງ ແຕ່ຕໍາແໜ່ງນາຍົກລັດຖະມົນຕີ ອາດມາຈາກພັກ NFP ທີ່ໄດ້ບ່ອນນັ່ງຫຼາຍກວ່າໝູ່ ໃນການເລືອກຕັ້ງຄັ້ງນີ້. ແນວໃດກໍດີ, ທ່ານ ທ່ານ Emmanuel Macron, ປະທານາທິບໍດີຝຣັ່ງ ໄດ້ຖະແຫຼງວ່າ ຈະບໍ່ທັນອະນຸຍາດໃຫ້ ທ່ານ Gabriel Attal, ນາຍົກລັດຖະມົນຕີຄົນປັດຈຸບັນລາອອກ, ທ່ານ ຕ້ອງດໍາລົງຕໍາແໜ່ງດັ່ງກ່າວ ຈົນກວ່າຈະສາມາດຈັດຕັ້ງລັດຖະບານໄດ້. ແຕ່ຕໍາແໜ່ງປະທານາທິບໍດີ ຍັງແມ່ນ ທ່ານ Emmanuel Macron ແລະ ຈົນຄົບອາລະໃນປີ 2027.

### 9) ການເລືອກຕັ້ງທົ່ວໄປໃນສະຫະຣາຊະອານາຈັກອັງກິດ ແລະ ອຽກລັງເໜືອ

ໃນວັນທີ 4/7/2024, ຣາຊະອານາຈັກອັງກິດ ໄດ້ຈັດການເລືອກຕັ້ງທົ່ວປະເທດ ພາຍຫຼັງ ທ່ານ Rishi sunak ນາຍົກລັດຖະມົນຕີອັງກິດ ໄດ້ປະກາດຍຸບສະພາ ໃນວັນທີ 22/5/2024 ເພື່ອເລືອກເອົາສະມາຊິກສະພາ 650 ທ່ານ, ຜົນການເລືອກຕັ້ງ ພັກແຮງງານອັງກິດ ເຊິ່ງເປັນພັກກາງຊ້າຍ ນໍາໂດຍ ທ່ານ Keir starmer ໄດ້ໄຊຊະນະ ດ້ວຍບ່ອນນັ່ງ 412 ບ່ອນນັ່ງໃນສະພາ (ເພີ່ມຂຶ້ນ 214 ບ່ອນນັ່ງ ຖ້າທຽບໃສ່ການເລືອກຕັ້ງໃນປີ 2019), ສ່ວນພັກອະນຸລັກນິຍົມຂອງ ທ່ານ Rishi sunak, ພັກກໍາອໍານາດປະຈຸບັນ ໄດ້ພຽງ 121 ບ່ອນນັ່ງ; ພັກເສລີປະຊາທິປະໄຕ ເຊິ່ງເປັນພັກການເມືອງເປັນກາງ ໄດ້ 72 ບ່ອນນັ່ງ; ພັກປະຕິຮູບຂວາຈັດ (Reform Party) ທີ່ສ້າງຕັ້ງຂຶ້ນໃໝ່ ໄດ້ຮັບບ່ອນນັ່ງໃນສະພາເປັນຄັ້ງທໍາອິດ 5 ບ່ອນນັ່ງ. ການເລືອກຕັ້ງຄັ້ງນີ້ ເປັນໄຊຊະນະຄັ້ງປະຫວັດສາດຂອງພັກແຮງງານ ພາຍຫຼັງລາຊະອານາຈັກອັງກິດ ປົກຄອງໂດຍພັກອະນຸລັກນິຍົມ ເປັນເວລາ 14 ປີ. ພາຍຫຼັງຄວາມປະລາໄຊ ດັ່ງກ່າວ, ທ່ານ Rishi sunak ໄດ້ລາອອກຈາກຫົວໜ້າພັກອະນຸລັກນິຍົມ ກໍຄືຕໍາແໜ່ງນາຍົກລັດຖະມົນ. ສ່ວນ ທ່ານ Keir Starmer, ຫົວໜ້າພັກແຮງງານ ໄດ້ເຂົ້າສາບານຕົນກັບເຈົ້າຊີວິດ Charles ທີ III ແຫ່ງຣາຊະອານາຈັກອັງກິດ ຮັບຕໍາແໜ່ງເປັນນາຍົກລັດຖະມົນຕີອັງກິດ ຢ່າງເປັນທາງການ ໃນວັນທີ 5 ກໍລະກົດ 2024 ແລະ ໄດ້ຈັດຕັ້ງຄະນະລັດຖະບານຊຸດໃໝ່ ທັງໝົດ 23 ທ່ານ, ໃນນັ້ນ ແມ່ນ ທ່ານ Angela Rayner ເປັນຮອງນາຍົກລັດຖະມົນຕີ; ທ່ານ David Lammy ເປັນລັດຖະມົນຕີຕ່າງປະເທດ ແລະ ທ່ານ John Healey ເປັນລັດຖະມົນຕີປ້ອງກັນປະເທດ. ທ່ານ Keir Starmer ເປັນນັກກົດໝາຍດ້ານມະນຸດສະທໍາ, ອະດີດຫົວໜ້າສໍານັກງານໄອຍະການອັງກິດ, ມີຈຸດຢືນທາງການເມືອງແບບກາງຊ້າຍ, ທ່ານ ມີຄໍາຂວັນ ແລະ ນະໂຍບາຍວ່າ: “Time for change” ເຊິ່ງຈະນໍາອັງກິດກັບຄືນສູ່ສະພາບປົກກະຕິໃຫ້ມີສະຖຽນລະພາບທາງດ້ານເສດຖະກິດ, ຈະບໍ່ມີການຂຶ້ນອາກອນລາຍໄດ້, ປັບປຸງການບໍລິການດ້ານສາທາລະນະສຸກໃຫ້ມີຄວາມວ່ອງໄວ, ເຂັ້ມງວດຕໍ່ບັນຫາຊາວຜູ້ອົບພະຍົບເຂົ້າເມືອງ, ສ້າງຕັ້ງບໍລິສັດພະລັງງານສະອາດ, ສ້າງສັງຄົມໃຫ້ມີຄວາມປອດໄພ ແລະ ຈະມີການຮັບຈ້າງຄູເພີ່ມຂຶ້ນ 6,500 ຕໍາແໜ່ງ.

### 10) ການເລືອກຕັ້ງປະທານາທິບໍດີອີຣານ

ພາຍຫຼັງປະທານາທິບໍດີອີຣານ ໄດ້ເສຍຊີວິດ ຍ້ອນອຸບັດຕິເຫດຍົນຕົກ ວັນທີ 19/5/2024 ຜ່ານມາ, ວັນທີ 28/6/2024, ອີຣານ ໄດ້ຈັດການເລືອກຕັ້ງປະທານາທິບໍດີ ຄົນທີ 14 ຂຶ້ນ ໂດຍມີຜູ້ສະໝັກທັງໝົດ 4 ຄົນ. ຜົນການເລືອກຕັ້ງ: ① ທ່ານ Masoud pezeshkian, ອະດີດລັດຖະມົນຕີສາທາລະນະສຸກ ໄດ້ຮັບຄະແນນສຽງ 10,415,991 ສຽງ (42,6%); ② ທ່ານ Saeed Jalili, ອະດີດເລຂາທິການສະພາຄວາມໝັ້ນຄົງສູງສຸດແຫ່ງຊາດ ໄດ້ຄະແນນສຽງ 9,473,298 (38,8%); ③ ທ່ານ Mohammad baghar Ghalibaf, ປະທານລັດຖະສະພາ ໄດ້ຄະແນນສຽງ 3,383,340 (13,8%); ④ Mostafa pourmohammadi, ລັດຖະມົນຕີກະຊວງຍຸດຕິທາ ໄດ້ຄະແນນສຽງ 206,397 (0,8%). ເຫັນວ່າ ບໍ່ມີທ່ານໃດ ໄດ້ຄະແນນສຽງຫຼາຍກວ່າ 50%, ຈຶ່ງມີການເລືອກຕັ້ງຮອບທີ 2 ໃນວັນທີ 5 ກໍລະກົດ 2024 ໂດຍແມ່ນສອງທ່ານ ທີ່ມີຄະແນນສູງ ຄື: ທ່ານ Masoud pezeshkian ແລະ ທ່ານ Saeed Jalili ລົງແຂ່ງກັນ, ຊຶ່ງຜົນການເລືອກຕັ້ງ ແມ່ນທ່ານ Masoud pezeshkian ໄດ້ໄຊຊະນະ ດ້ວຍຄະແນນສຽງສະໜັບສະໜູນ 16,384,400 ສຽງ (54,7%), ສ່ວນ ທ່ານ ທ່ານ Saeed Jalili ໄດ້ພຽງ 13,500,000 ສຽງ. ດ້ວຍໄຊຊະນະດັ່ງກ່າວ, ທ່ານ Masoud pezeshkian ໄດ້ຮັບເລືອກຕັ້ງເປັນປະທານາທິບໍດີຄົນໃໝ່ຂອງອີຣານ.

ປະທານາທິບໍດີຣັດເຊຍ ໄດ້ສະແດງຄວາມຍິນດີຕໍ່ຜົນການເລືອກຕັ້ງດັ່ງກ່າວ ແລະ ພ້ອມຈະຮ່ວມມືທີ່ດີກັບອີຣານ ຄື ກັບທຸກສະໄໝຜ່ານມາ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

- **ສະຖານະການແຫຼມເກົາຫຼີ** : ໃນວັນທີ 23/6/2024, ສ.ອາເມຣິກາ ໄດ້ສົ່ງເຮືອບັນທຸກເຮືອບິນຮົບ ພ້ອມກັບກອງເຮືອຕິດຕາມ ຈຳນວນໜຶ່ງ ເຂົ້າທຽບທ່າ ທີ່ເມືອງປູຊານ ຂອງ ສ.ເກົາຫຼີ ແລະ ໄດ້ຝຶກຊ້ອມຮົບຮ່ວມກັບກອງທັບ ສ.ເກົາຫຼີ ແລະ ກອງທັບຍີ່ປຸ່ນ. ໃນວັນທີ 22/7/24, ສ.ອາເມຣິກາ ແລະ ສ.ເກົາຫຼີ ຊ້ອມຮົບຮ່ວມກັນ. ໃນວັນທີ 9/7/2024, ທ່ານນາງ ກິມໂຍຈອງ, ຄະນະກຳມະທິການ ການຕ່າງປະເທດຂອງ ສປປ.ເກົາຫຼີ ໄດ້ປະນາມ ສ.ເກົາຫຼີ ທີ່ໄດ້ຊ້ອມຮົບໃກ້ຊາຍແດນ ຂອງ ສປປ ເກົາຫຼີ ໃນທ້າຍເດືອນມິຖຸນາ 2024 ຜ່ານມາ ເປັນການກະທຳທີ່ຍຸແຍ່ ຊຶ່ງຈະເພີ່ມທະວີຄວາມເຄັ່ງຕຶງ ໃນແຫຼມເກົາຫຼີ ແລະ ວ່າຖ້າລ່ວງລະເມີດອະທິປະໄຕ ສປປ.ເກົາຫຼີ ຈະຕອບໂຕ້ທັນທີ.
- **ທ່ານ Vladimir Putin**, ປະທານາທິບໍດີຣັດເຊຍ ໄດ້ຢ້ຽມຢາມ ສປປ ເກົາຫຼີ ຢ່າງເປັນທາງການ ໃນລະຫວ່າງ 18-19/6/2024, ໂດຍໄດ້ຮັບການຕ້ອນຮັບຢ່າງສົມກຽດ. ທ່ານ ປູຕິນ ໄດ້ສະແດງຄວາມຂອບໃຈ ສປປ ເກົາຫຼີ ທີ່ສະໜັບສະໜູນນະໂຍບາຍຕ່າງປະເທດຂອງຣັດເຊຍ ຢ່າງສະເໝີຕົ້ນສະເໝີປາຍ ແລະວ່າ ຣັດເຊຍຈະເສີມຄວາມເຂັ້ມແຂງແກ່ ສປປ ເກົາຫຼີ ເພື່ອຕ້ານກັບໄພຂົ່ມຂູ່ຕ່າງໆ. ຂະນະທີ່ ທ່ານ ກິມ ເຈິງ ອຸນ ໄດ້ກ່າວວ່າ ສປປ ເກົາຫຼີ ແລະ ຣັດເຊຍ ມີການພົວພັນສະໜິດແໜ້ນ ແຕ່ອະດີດຈົນຮອດປັດຈຸບັນ. ການຢ້ຽມຢາມຄັ້ງນີ້, ສອງຝ່າຍໄດ້ເຊັນສັນຍາເປັນຄູ່ຮ່ວມຍຸດທະສາດຮອບດ້ານ; ພ້ອມກັນນັ້ນ, ໄດ້ເຊັນສັນຍາຊ່ວຍເຫຼືອເຊິ່ງກັນ ແລະ ກັນ ດ້ານການທະຫານ; ສັນຍາຮ່ວມມືດ້ານສາທາລະນະສຸກ ແລະ ວິທະຍາສາດ; ມີການຕົກລົງກ່ຽວກັບຄວາມເປັນໄປໄດ້ໃນການສ້າງຂົວເຊື່ອມຕໍ່ລະຫວ່າງ ຣັດເຊຍ-ສປປ.ເກົາຫຼີ.

ທ່ານ ປູຕິນ ໄດ້ຢ້ຽມຢາມ ສສ.ຫວຽດນາມ ໃນລະຫວ່າງ 19-20/6/2024, ສອງຝ່າຍເຫັນດີເພີ່ມທະວີຄວາມຮ່ວມມືດ້ານເສດຖະກິດ, ການສຶກສາ ແລະ ພະລັງງານ ລວມທັງການຮ່ວມມືພະລັງງານນິວເຄລຍ, ມູນຄ່າການຄ້າສອງປະເທດ ປີ 2022 ບັນລຸໄດ້ເຖິງ 3.5 ຕື້ໂດລາສະຫະລັດ; ເຫັນດີນຳໃຊ້ສະກຸນເງິນ ຂອງສອງປະເທດໃນການຊື້ຂາຍ, ແລກປ່ຽນ; ມີການເຊັນສັນຍາຮ່ວມກັນທັງໝົດ 11 ສະບັບ. ນອກນັ້ນ, ທ່ານ ປູຕິນ ກໍ່ກ່າວວ່າ ມີຄວາມເປັນໄປໄດ້ທີ່ຈະສ້າງເສັ້ນທາງຄົມມະນາຄົມລະຫວ່າງ ເມືອງ Vladivostok ຂອງຣັດເຊຍ ຫານະຄອນ ໂຮ່ຈິມິນຂອງຫວຽດນາມ ແລະ ຮ່ວມກັນດຳເນີນໂຄງການ ING ( ໂຄງການທີ່ປ່ຽນຈາກກາສທຳມະຊາດໃຫ້ເປັນຂອງແຫຼວ ກ່ອນຈະສົ່ງຈາກຣັດເຊຍ ມາຍັງຫວຽດນາມ).

- **ກອງປະຊຸມສຸດຍອດຄວາມໝັ້ນຄົງອາຊີ :** ວັນທີ 31/5/-2/6/2024, ສິງກະໂປ ເປັນເຈົ້າພາບຈັດກອງປະຊຸມສຸດຍອດຄວາມໝັ້ນຄົງອາຊີ ຄັ້ງທີ 21 (The 21st IIS Shangri-La Dialougue) ໂດຍມີລັດຖະມົນຕີ ປ້ອງກັນປະເທດ, ຜູ້ຮັບຜິດຊອບວຽກງານຄວາມໝັ້ນຄົງ ຈາກທົ່ວໂລກເຂົ້າຮ່ວມ, ໂດຍລວມໄດ້ແລກປ່ຽນດ້ານຄວາມໝັ້ນຄົງ, ຮ່ວມມືກັນແກ້ໄຂ ບັນຫາທີ່ເກີດຂຶ້ນ ເພື່ອຄວາມສະຫງົບໃນຂົງເຂດພາກພື້ນ. ທ່ານ Zelensky ປະທານາທິບໍດີອູແກຣນ ໄດ້ເຂົ້າຮ່ວມ ແລະ ມີຄຳເຫັນ ເພື່ອຂົນຂວາຍຜູ້ເຂົ້າຮ່ວມໃຫ້ໄປຮ່ວມກອງປະຊຸມສ້າງສັນຕິພາບ ອູແກຣນ ທີ່ໄດ້ຈັດຂຶ້ນ ໃນວັນທີ 15-16/6/2024 ທີ່ປະເທດສະວິດ, ທັງໄດ້ກ່າວຫາວ່າຈີນ ຊ່ວຍເຫຼືອທາງທະຫານແກ່ຣັດເຊຍ ແລະ ວ່າຈີນຂົນຂວາຍ ບໍ່ໃຫ້ປະເທດເພື່ອນມິດຂອງຕົນເຂົ້າຮ່ວມກອງປະຊຸມສັນຕິພາບດັ່ງກ່າວ. ທ່ານ ຕົງຈຸນ (Dong Jon), ລັດຖະມົນຕີປ້ອງກັນປະເທດຈີນ ໄດ້ກ່າວຕອບໂຕ້ວ່າ ຈີນບໍ່ເຄີຍໃຫ້ການຊ່ວຍເຫຼືອທະຫານແກ່ຣັດເຊຍ ແລະ ຮຽກຮ້ອງໃຫ້ອາເມຣິກາ ຢຸດຕິການເຂົ້າມາແຊກແຊງ, ສ້າງຄວາມຂັດແຍ່ງ ໃນຂົງເຂດທະເລຈີນໃຕ້ ແລະ ແຊກແຊງບັນຫາໄຕ້ຫວັນຮຽກຮ້ອງໃຫ້ບັນດາຜູ້ກ່ຽວຂ້ອງຮ່ວມມືພັດທະນາຂົງເຂດດັ່ງກ່າວໃຫ້ມີຄວາມສະຫງົບມີສັນຕິພາບ. ພາຍຫຼັງ ປະຊຸມຢູ່ສິງກະໂປ, ທ່ານ Volodymyr Zelensky ໄດ້ຢ້ຽມຢາມ ຟີລິບປິນ ກ່າວວ່າອູແກຣນຈະເປີດສະຖານທູດ ໃນຟີລິບປິນ ພາຍໃນປີ 2024 ແລະ ພ້ອມຈະສົ່ງອອກສິນຄ້າກະສິກຳຂອງອູແກຣນ ມາຟີລິບປິນ. ຂະນະນັ້ນ, ທ່ານ ລອຍ ອອສຕິນ(Lloyd Austin), ລັດຖະມົນຕີປ້ອງກັນປະເທດ ອາເມຣິກາ ກໍ່ໄດ້ຢ້ຽມຢາມກຳປູເຈຍ ແລະ ໄດ້ສະແດງຄວາມເປັນຫ່ວງທີ່ກຳປູເຈຍ ໄດ້ອະນຸຍາດໃຫ້ເຮືອຮົບຂອງຈີນ ສາມາດທຽບທ່າ ຢູ່ຖານທັບເຮືອຂອງກຳປູເຈຍ ໄດ້ພຽງຜູ້ດຽວ ແລະ ເປັນຫວ່ງຕໍ່ການຝຶກຊ້ອມລະຫວ່າງກຳປູເຈຍ ແລະ ຈີນລະຫວ່າງວັນທີ 16-30/5/2024.

- **ກອງປະຊຸມ SCO :** ກອງປະຊຸມສຸດຍອດ ຄັ້ງທີ 24 ຂອງອົງການຮ່ວມມືຊຽງໄຮ (The 24th annual summit of th Shanghai Cooperation Organisation : SCO) ໄດ້ຈັດຂຶ້ນ ໃນວັນທີ 3-4/7/2024 ທີ່ນະຄອນຫຼວງອາສຕານາ, ກາຊັກສະຖານ ພາຍໃຕ້ຫົວຂໍ້ "ການສ້າງຄວາມເຂັ້ມແຂງໃຫ້ແກ່ການເຈລະຈາຫຼາຍຝ່າຍ ເພື່ອສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງທີ່ຍືນຍົງ" (Strengthening Multilateral Dialogue-striving Towards a sustainable peace and prosperity), ມີການຮັບຮອງເອກະສານ 24 ສະບັບ ລວມທັງຖະແຫຼງການອາສຕານ້າ ແລະ ຄວາມຄິດລິເລີ່ມວ່າດ້ວຍຄວາມເປັນເອກະພາບຂອງໂລກ ເພື່ອສັນຕິພາບ ແລະ ຄວາມສາມັກຄີ. ກອງປະຊຸມຄັ້ງນີ້ ແມ່ນໄດ້ຮັບຮອງເອົາ ເບລາຣຸດຊີ ເປັນສະມາຊິກຂອງອົງການ SCO. ປັດຈຸບັນ, ອົງການ SCO ມີສະມາຊິກ 10 ປະເທດ ຄື: ສປ.ຈີນ, ສ.ຣັດເຊຍ, ກາຊັກສະຖານ, ກຽກກິດສະຖານ, ຕັດຈິກິດສະຖານ, ອຸດສະເບກິດສະຖານ, ອິນເດຍ, ປາກິດສະຖານ, ອີຣານ ແລະເບລາຣຸດຊີ.

ໃນໂອກາດ ເຂົ້າຮ່ວມກອງປະຊຸມສຸດຍອດດັ່ງກ່າວ ທ່ານ ສີ ຈິ້ນຜິງ ປະທານປະເທດແຫ່ງ ສປ ຈີນ ແລະ ທ່ານ ໂຕຄາເຢັຟ, ປະທານາທິບໍດີກາຊັກສະຖານ ໄດ້ຮ່ວມກັນເປັນປະທານຜ່ານວິດີໂອທາງໄກ ທີ່ທຳນຽບປະທານາທິບໍດີກາຊັກສະຖານ ທີ່ນະຄອນຫຼວງອາສຕານາ ໃນພິທີເປີດການນຳໃຊ້ເສັ້ນທາງດ່ວນຂ້າມທະເລກາສປຽນ (Caspian Sea). ລົດຂົນສົ່ງຂອງຈີນ ໄດ້ໄປເຖິງ ທ່າເຮືອແຄມຝັ່ງທະເລກາສປຽນ ເປັນຄັ້ງທຳອິດ ໂດຍໃຊ້ເສັ້ນທາງດັ່ງກ່າວ, ມີຄວາມຍາວ 4256 ກິໂລແມັດ ເລີ່ມຈາກທ່າເຮືອ Lianyungang ຂອງຈີນ ຜ່ານກາຊັກສະຖານ 502 ກິໂລແມັດ, ຜ່ານທະເລກາສປຽນ 568 ກິໂລແມັດ ອອກໄປຍັງຊອກຊີ, ຕວັກກີ ໄປຫາປະເທດອື່ນໆໃນທະວີບເອີຣົບ.

- **ສະຖານະການໃນມຽນມາ:** ວັນທີ 12/7/2024, ພັກກອມມູນິດຈີນ (CPC) ໄດ້ເຊີນ 4 ພັກການເມືອງມຽນມາຄື: ພັກສາມັກຄີ ແລະ ການພັດທະນາຂອງກອງທັບມຽນມາ (Union Solidarity and Development Party:USDP), ພັກປະຊາຊົນມຽນມາ (People's Party:PP), ພັກແນວໂຮມມຽນມາ (Arakan Front Party: AFP) ແລະ ພັກປະຊາທິປະໄຕບັນດາເຜົ່າຂອງມຽນມາ (Shan and Ethnic Democratic Party: SEDP) ໄປຢ້ຽມຢາມ ສປ.ຈີນ ແຕ່ວັນທີ 20-27/7/2024 ເພື່ອເພີ່ມທະວີການພົວພັນລະຫວ່າງພັກກອມມູນິດຈີນ ກັບ ພັກການເມືອງຂອງມຽນມາ, ໂດຍມີ ຄະນະຜູ້ແທນ 17 ຄົນ ຈາກ 4 ພັກການເມືອງດັ່ງກ່າວ. 4 ພັກ ດັ່ງກ່າວນີ້ ໄດ້ລົງທະບຽນຈະລົງແຂ່ງຂັນເລືອກຕັ້ງທີ່ປະເທດມຽນມາ ໃນປີ 2025. ປັດຈຸບັນ, ມີ 49 ພັກ ທີ່ໄດ້ຮັບອະນຸມັດໃຫ້ລົງເລືອກຕັ້ງ.

**- ຟີລິບປິນ-ສປ.ຈີນ:** ໃນວັນທີ 8/7/2024, ຍີ່ປຸ່ນ ແລະ ຟີລິບປິນ, ໄດ້ລົງນາມໃນຂໍ້ຕົກລົງດ້ານຄວາມໝັ້ນຄົງເພື່ອສ້າງຄວາມສະດວກໃຫ້ແກ່ການຊ້ອມຮົບຮ່ວມລະຫວ່າງກຳລັງປ້ອງກັນຕົນເອງຂອງຍີ່ປຸ່ນ ແລະ ກອງທັບຟີລິບປິນ. ຈີນ ໄດ້ຖະແຫຼງການຕອບໂຕ້ສັນຍາດັ່ງກ່າວວ່າ ຂົງເຂດອາຊີ-ປາຊີຟິກ ບໍ່ຕ້ອງການກຸ່ມການທະຫານ ຫຼື ກຸ່ມໃດໆທີ່ເປັນການຍຸແຍ່ໃຫ້ມີການປະເຊີນໜ້າກັນ. ທະຫານອາກາດຟີລິບປິນ 162 ຄົນ ພ້ອມດ້ວຍເຄື່ອງບິນຂັບໄລ່ FA-50 ຂອງຟີລິບປິນ ເຂົ້າຮ່ວມຝຶກຊ້ອມຮົບທາງອາກາດຮ່ວມກັບເຄື່ອງບິນຮົບອາເມຣິກາ ແລະ ອິດສະຕຣາລີ ທີ່ ປະເທດອິດສະຕຣາລີ ແລະ ໃນລະຫວ່າງວັນທີ 14-17/7/2024. ຈີນ ແລະ ຣັດເຊຍ ຊ້ອມຮົບຮ່ວມທາງທະເລ ແລະ ລາດຕະເວນ 2024 ຄັ້ງທີ 4 ຢູ່ທ່າກຳປັ່ນຂອງເມືອງ Zhanjiang, ແຂວງກວາງຕຸ້ງທາງພາກໃຕ້ຂອງຈີນເພື່ອກຽມຄວາມພ້ອມໃນການຕ້ານໄພຂົ່ມຂູ່ແລະ ປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບຂອງໂລກ ແລະ ພາກພື້ນ. ນອກນັ້ນ ກອງຕຳຫຼວດປະກອບອາວຸດຈີນ ກັບກອງຕຳຫຼວດເຄື່ອນໄຫວໄວຂອງກະຊວງປ້ອງກັນຄວາມສະຫງົບຫວຽດນາມ ໄດ້ຮ່ວມກັນຝຶກຊ້ອມຕ້ານການກໍ່ການຮ້າຍ ພາຍໃຕ້ຫົວຂໍ້ "ການຮ່ວມມື 2024" ຢູ່ນະຄອນໜານໜິງ, ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີຈີນ ໃນລະຫວ່າງທ້າຍເດືອນ ກໍລະກົດ ຫາ ຕົ້ນເດືອນ ສິງຫາ 2024 ເພື່ອຖອດຖອນແລກປ່ຽນບົດຮຽນດ້ານການຕ້ານການກໍ່ການຮ້າຍ, ເພີ່ມຄວາມເຂົ້າໃຈກັນ ແລະ ໄວ້ເນື້ອເຊື່ອໃຈກັນລະຫວ່າງສອງປະເທດ.

## 2) ສະພາບການເອີຣົບ-ອາເມຣິກາ

**ຂໍ້ຂັດແຍ່ງອູແກຣນ-ຣັດເຊຍ:** ອູແກຣນ ແລະ ຣັດເຊຍ ຍັງສືບຕໍ່ໂຈມຕີ ໂດຍສະເພາະ ໃນພາກຕາເວັນອອກຂອງ ອູແກຣນ ແລະ ພາກພື້ນ Belgorod ຂອງຣັດເຊຍ, ອູແກຣນໄດ້ໃຊ້ຂີປະນາວຸດຍຸດທະວິທີ ATACMS ໂຈມຕີເມືອງ Svastopol ເມືອງເອກຂອງແຫຼມ Crimea. ອາເມຣິກາ ແລະ ພັນທະມິດຈຳນວນໜຶ່ງເຊັ່ນ : ອັງກິດ, ໂປໂລຍ ແລະ ລັດເວຍ ໄດ້ເຫັນດີ ໃຫ້ອູແກຣນ ນຳໃຊ້ອາວຸດທີ່ໄດ້ຮັບການສະໜັບສະໜູນຈາກພວກເຂົາໂຈມຕີເຂົ້າໄປໃນດິນແດນຣັດເຊຍ ເຮັດໃຫ້ຂໍ້ຂັດແຍ່ງດັ່ງກ່າວເພີ່ມທະວີຄວາມຮຸນແຮງຂຶ້ນ, ພ້ອມກັນນັ້ນ ສະຫະພາບເອີຣົບ ໄດ້ໃຫ້ການຊ່ວຍເຫຼືອອູແກຣນ

ມູນຄ່າ 500 ລ້ານ ເອີໂຣ ແລະ 1,9 ຕື້ໂດລາສະຫະລັດ ໃນທ້າຍເດືອນ 6/2024, ຂະນະທີ່ ກອງປະຊຸມ G7 ຢູ່ປະເທດອີຕາລີ ໃນວັນທີ 13/6/2024 ໄດ້ເຫັນດີຈະໃຫ້ເງິນກູ້ຢືມແກ່ອູແກຣນ 50 ຕື້ໂດລາສະຫະລັດ. ໃນກອງປະຊຸມຂອງກຸ່ມ NATO ລະຫວ່າງວັນທີ 09-11/07/2024 ໄດ້ຢັ້ງຢືນຈະສືບຕໍ່ສະໜັບສະໜູນອູແກຣນ. ໃນນັ້ນ, ນອກແວ ໄດ້ປະກາດຈະສົ່ງເຄື່ອງບິນຮົບ F-16 ຈຳນວນ 06 ເຄື່ອງ ໃຫ້ອູແກຣນ; ການາດາ ຈະຊ່ວຍ ອູແກຣນ 500 ລ້ານໂດລາການາດາ (365 ລ້ານໂດລາສະຫະລັດ). ວັນທີ 08/07/2024 ຜ່ານມາ, ອູແກຣນ ແລະ ໂປໂລຍ ໄດ້ເຊັນຂໍ້ຕົກລົງທາງທະຫານຮ່ວມກັນ ເຊິ່ງອະນຸຍາດໃຫ້ໂປໂລຍ ສາມາດຍິງຂີປະນາວຸດ ແລະ ໂດຣນ ຂອງຣັດເຊຍ ໃນນ່ານຟ້າຂອງອູແກຣນໄດ້, ໃນວັນທີ 12/6/2024, ຣັດເຊຍ ໄດ້ສົ່ງເຮືອດຳນໍ້ານິວເຄລຍ (KASAN) ແລະ ເຮືອຮົບຊະນິດອື່ນອີກ ເດີນທາງໄປທີ່ທ່າເຮືອ Havana ຂອງກູບາ, ຊຶ່ງປະຈຳການຢູ່ທີ່ທ່າເຮືອດັ່ງກ່າວ 12-17/6/2024 ຕາມການຮ່ວມມືທາງທະຫານລະຫວ່າງກູບາ ແລະ ຣັດເຊຍ. ນອກຈາກນັ້ນ, ລັດເຊຍ ແລະ ເບລາຣຸດຊີ ໄດ້ຝຶກຊ້ອມຮົບທາງບົກ ແລະ ທາງອາກາດ ດ້ວຍອາວຸດນິວເຄລຍທາງຍຸດທະສາດ ໄລຍະ 2 ພາຍຫຼັງທີ່ຝຶກຊ້ອມຮ່ວມກັນໄລຍະທຳອິດ ໃນເດືອນ ກຸມພາ 2024. ຂະນະທີ່, ຈີນ ໄດ້ສົ່ງທະຫານ ໄປຮ່ວມຝຶກຊ້ອມຮົບທາງພາກຕາເວັນຕົກສຽງໃຕ້ຂອງເບລາຣຸດຊີ ໃນເຂດຊາຍແດນລະຫວ່າງເບລາຣຸດຊີ ກັບໂປໂລຍ ແລະ ຫ່າງຈາກຊາຍແດນທີ່ຕິດກັບອູແກຣນ ພຽງ 64 ກິໂລແມັດ ລະຫວ່າງວັນທີ 08-19/7/2024 ໂດຍໃສ່ຊື່ວ່າ "Eagle Assault-2024" ເປັນການຊ້ອມວິທີຮັບມືກັບກຸ່ມກໍ່ການຮ້າຍ. ສຳລັບການເຈລະຈາຢຸດຕິຂໍ້ຂັດແຍ່ງຂອງສອງຝ່າຍຍັງເປັນໄປໄດ້ຍາກ. ໃນວັນທີ 14/6/2024, ຣັດເຊຍ ໄດ້ຖະແຫຼງການ ພ້ອມຈະຢຸດຍິງ ແລະ ເລີ່ມການເຈລະຈາ ຖ້າຫາກອູແກຣນ ປະຕິບັດຕາມເງື່ອນໄຂ 5 ຂໍ້ຄື: 1.ຍອມຮັບ 4 ແຂວງໃໝ່ ທີ່ໄດ້ລົງປະຊາມະຕິເຂົ້າຮ່ວມກັບລັດເຊຍ ລວມເຖິງແຫຼມ Crimea; 2.ຖອນກຳລັງທະຫານອູແກຣນ ອອກຈາກພື້ນທີ່ໃໝ່ຂອງຣັດເຊຍ; 3.ອູແກຣນ ຕ້ອງຍົກເລີກການສະໝັກເພື່ອເຂົ້າຮ່ວມນາໂຕ້; 4.ອູແກຣນ ຕ້ອງເປັນກາງ ແລະ 5.ເຄົາລົບສິດຂອງປະຊາຊົນອູແກຣນ ທີ່ເວົ້າພາສາຣັດເຊຍ. ຂໍ້ສະເໜີດັ່ງກ່າວໄດ້ຖືກປະຕິເສດຈາກ ອູແກຣນ ແລະ ກອງປະຊຸມກ່ຽວກັບບັນຫາອູແກຣນ ທີ່ຈັດຂຶ້ນທີ່ປະເທດສະວິດ ໃນວັນທີ 15-16/6/2024 ມີຕົວແທນຈາກ 92 ປະເທດ, 8 ອົງການຈັດຕັ້ງສາກົນ ລວມເປັນ 100 ພາກສ່ວນເຂົ້າຮ່ວມ, ແຕ່ຖະແຫຼງການຮ່ວມມີ 12 ພາກສ່ວນ ປະຕິເສດບໍ່ລົງນາມ. ສ່ວນຜູ້ນຳຮົງກາລີ ໃນຖານະເປັນປະທານໝູນວຽນຂອງສະຫະພາບເອີຣົບ ໄດ້ຢ້ຽມຢາມອູແກຣນ ແລະ ຣັດເຊຍ ໃນທ້າຍອາທິດຜ່ານມາ ເພື່ອປຶກສາຫາລືກ່ຽວກັບການຢຸດຕິຄວາມຂັດແຍ່ງໃນອູແກຣນ ແຕ່ກໍບໍ່ປະສົບຜົນສຳເລັດ ເນື່ອງຈາກ ທັງອູແກຣນ ແລະ ຣັດເຊຍ ຕ່າງຢໍ້າຄືນຈຸດຢືນຂອງຕົນເອງ; ບໍ່ມີຝ່າຍ ຍອມຮັບຂໍ້ສະເໜີຂອງກັນແລະກັນໄດ້. ແນວໃດກໍ່ຕາມ, ອູແກຣນ ແລະ ຣັດເຊຍ ໄດ້ມີການແລກປ່ຽນນັກໂທດ ຝ່າຍລະ 95 ຄົນ ໃນວັນທີ 17/7/2024 ຜ່ານມາ.

**ສ.ອາເມຣິກາ:** ການໂຕ້ວາທີຮອບທຳອິດ ລະຫວ່າງ ທ່ານ ໂຈ ໄບເດັນ ຈາກພັກ Democrat ແລະ ທ່ານ ໂດໂນທຣຳ ຈາກພັກ Republican ເພື່ອກະກຽມແກ່ການເລືອກຕັ້ງປະທານາທິບໍດີອາເມຣິກາ ໃນເດືອນ 11/2024, ສອງທ່ານ ໄດ້ຖົກຖຽງຫຼາຍບັນຫາ ກ່ຽວກັບນະໂຍບາຍພາຍໃນ ແລະ ຕ່າງປະເທດ, ເຫັນວ່າ ທ່ານ ທຣຳ ສາມາດໂຕ້ຕອບບັນຫາຕ່າງໆ ໄດ້ດີກວ່າ ທ່ານ ໂຈ ໄບເດັນ, ພາຍຫຼັງການໂຕ້ວາທີ, ໄດ້ມີຜົນສຳຫຼວດອອກມາວ່າ: 65% ເຊື່ອວ່າ ທ່ານທຣຳ ຈະຊະນະການເລືອກຕັ້ງ, ມີພຽງ 23% ທີ່ເຊື່ອວ່າ ທ່ານ ໂຈ ໄບເດັນ ຈະຊະນະ. ວັນທີ 2/7/2024, ຄະນະຕຸລາການສານສູງສຸດ ສ.ອາເມຣິກາ ມີມະຕິສຽງສ່ວນຫຼາຍ (6 ຕໍ່ 3 ສຽງ) ຕັດສິນວ່າ ທ່ານ ໂດໂນ ທຣຳ, ອະດີດປະທານາທິບໍດີ ສ.ອາເມຣິກາ ຍັງຄົງມີສະຖານະໄດ້ຮັບການຄຸ້ມຄອງຈາກການຖືກດຳເນີນຄະດີທາງອາຍາ. ໃນວັນທີ 13/7/2024, ທ່ານ ໂດນັນ ທຣຳ ຖືກຫຼອນຍິງ ໃນຂະນະທີ່ ກຳລັງຫາສຽງເລືອກຕັ້ງ ທີ່ເມືອງບັດເລີ, ລັດເພັນຊິນວາເນຍ (Butler, Pennsylvania) ຂອງ ສ.ອາເມຣິກາ, ແຕ່ ທ່ານ ທຣຳ ແມ່ນປອດໄພ ໄດ້ຮັບບາດເຈັບເລັກໜ້ອຍທີ່ໃບຫູເບື້ອງຂວາ. ກອງປະຊຸມທົ່ວປະເທດ ຂອງພັກຣີພັບບລີກັນ ທີ່ຈັດຂຶ້ນວັນທີ 15-18/7/2024, ໄດ້ເຫັນດີໃຫ້ທ່ານ Donald Trump ເປັນຜູ້ສະໝັກຮັບເລືອກຕັ້ງປະທານາທິບໍດີ ຂອງພັກຢ່າງເປັນທາງການ. ພ້ອມນັ້ນ, ທ່ານ Trump ໄດ້ເລືອກເອົາທ່ານ Ohio JD Vance ເປັນຄູ່ຮ່ວມແຂ່ງຂັນ (ຮອງປະທານາທິບໍດີ). ວັນທີ 21/7/2024, ທ່ານ Joe Biden, ປະທານາທິບໍດີ ສ.ອາເມຣິກາ, ໄດ້ປະກາດຖອນຕົວອອກຈາກລາຍຊື່ຜູ້ສະໝັກລົງຊິງຕຳແໜ່ງປະທານາທິບໍດີຂອງພັກ Democrat ແລະ ໄດ້ສະເໜີ ທ່ານ ນາງ Kamala Harris, ຮອງປະທານາທິບໍດີອາເມຣິກາຄົນປະຈຸບັນ ເປັນຜູ້ສະໝັກລົງຊິງຕຳແໜ່ງປະທານາທິບໍດີປີ 2024 ແທນ.

### 3. ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ

ອິດສະຣາແອນ ກັບ ກຸ່ມຮາມາສ ຍັງສືບຕໍ່ປະທະກັນຢ່າງຕໍ່ເນື່ອງ, ນາຍົກລັດຖະມົນຕີອິດສະຣາແອນ, ທ່ານ Benjamin Netanyahu ຢືນຢັນຈະບໍ່ມີການຢຸດຍິງຖາວອນໃນກາຊາ ຈົນກວ່າກຸ່ມຮາມາສ ຈະຖືກທຳລາຍ, ອິດສະຣາແອນ ຍັງໄດ້ໂຈມຕີໂຮງຮຽນຂອງສະຫະປະຊາຊາດໃນແຫຼມກາຊາ. ສັ່ງປິດສຳນັກຂ່າວ AL Jazeera ໃນອິດສະຣາແອນ ທີ່ອອກຂ່າວກ່ຽວກັບສະຖານະການການໃນແຫຼມກາຊາ, ປັດຈຸບັນ ປະຊາຊົນໃນແຫຼມກາຊາ ປະເຊີນກັບບັນຫາມະນຸດສະທຳຢ່າງໜັກໜ່ວງ, ຊຶ່ງໂຄງການສະໜອງອາຫານຂອງ ສປຊ ກໍໄດ້ປະກາດຢຸດການສົ່ງອາຫານໄປຍັງແຫຼມກາຊາ ຊົ່ວຄາວຍ້ອນເປັນຫ່ວງເລື່ອງຄວາມປອດໄພ. ຜູ້ບາດເຈັບ ແລະ ເສຍຊີວິດ ເພີ່ມຂຶ້ນຈຳນວນຫຼາຍມາຮອດວັນທີ 4/7/2024 ມີຜູ້ເສຍຊີວິດຫຼາຍກວ່າ 38,500 ຄົນ, ບາດເຈັບຫຼາຍກວ່າ 87,000 ຄົນ ສ່ວນໃຫຍ່ແມ່ນແມ່ຍິງ ແລະເດັກນ້ອຍ. ອິດສະຣາແອນ ແລະ ກຸ່ມຮິດບອນເລາະ ໃນລີບັງ ໄດ້ໂຈມຕີກັນໄປມາຮຸນແຮງກວ່າເກົ່າ. ສ່ວນກຸ່ມຮູຕີໃນເຢເມນ ອ້າງວ່າໄດ້ໂຈມຕີທ່າເຮືອໄຮຟາ ຂອງອິດສະຣາແອນ ແຕ່ອິດສະຣາແອນປະຕິເສດວ່າບໍ່ແມ່ນຄວາມຈິງ.

ວັນທີ 21-23/7/2024, ກອງປະຊຸມສົນທະນາເພື່ອຄວາມປອງດອງກັນລະຫວ່າງ 14 ກຸ່ມ ຂອງປາແລັດສະຕິນ ລວມທັງ 2 ກຸ່ມໃຫຍ່ ກຸ່ມ Hamas ແລະ Fatah ໄດ້ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ ສປ ຈີນ. ໄດ້ຮ່ວມລົງນາມ "ຖະແຫຼງການປັກກິ່ງ" ກ່ຽວກັບການສິ້ນສຸດສະພາບການແບ່ງແຍກ ແລະ ເພີ່ມທະວີຄວາມສາມັກຄີໃນປາແລັດສະຕິນ. ຊຶ່ງເປັນບາດກ້າວສຳຄັນໃນການສົ່ງເສີມຄວາມປອງດອງພາຍໃນ ປາແລັດສະຕິນ ແລະ ສ້າງເງື່ອນໄຂສຳລັບການຢຸດຕິຄວາມຂັດແຍ້ງ Gaza ກັບອິດສະຣາແອນ. ວັນທີ 25/7/2024 ທ່ານ Benjamin Netanyahu, ນາຍົກລັດຖະມົນຕີ ອິສຣາແອນ , ກ່າວຄຳປາໄສຕໍ່ລັດຖະສະພາ ທີ່ນະຄອນຫຼວງວໍຊິງຕັນ, ສ.ອາເມຣິກາ ເພື່ອຮຽກຮ້ອງການສະໜັບສະໜູນຈາກອາເມຣິກາຕໍ່ຂໍ້ຂັດແຍ່ງໃນແຫຼມ Gaza. ໄດ້ກ່າວຢໍ້າຄືນວ່າ ຈະເອົາ "ໄຊຊະນະທັງໝົດ" ຈາກກຸ່ມ Hamas ໃຫ້ໄດ້ ແລະ ໄດ້ເນັ້ນໜັກວ່າ ອາເມລິກາ ແລະ ອິດສະຣາແອນມີສາຍພົວພັນທີ່ສະໜິດສະນິມມາແຕ່ດົນນານ. ອາເມຣິກາ ຄວນຮ່ວມກັບອິດສະຣາແອນ ເພື່ອໄຊຊະນະ ກຸ່ມ Hamas. ມີສະມາຊິກພັກເດໂມແຄຣັດຫຼາຍສິບຄົນບໍ່ເຂົ້າຮ່ວມ ແລະ ໃນລະຫວ່າງການປາໄສ ມີສະມາຊິກສະພາ 5 ຄົນ ລຸກຂຶ້ນສະແດງເສື້ອເຊີດທີ່ມີຄຳຂວັນຮຽກຮ້ອງໃຫ້ຢຸດສົງຄາມ ແລະ ປົດປ່ອຍຕົວປະກັນທີ່ຍັງເຫຼືອ ແລະ ຖືປ້າຍທີ່ຂຽນວ່າ: "ອາຊະຍາກຳສົງຄາມ" ແລະ "ຄວາມຜິດຂອງການຂ້າລ້າງເຜົ່າພັນ" ແລະ ມີຜູ້ປະທ້ວງຫຼາຍພັນຄົນຢູ່ນອກຕຶກລັດຖະສະພາ ກ່າວປະນາມສົງຄາມ ແລະ ວິກິດການດ້ານມະນຸດສະທຳທີ່ອິດສະຣາແອນ ສ້າງຂຶ້ນ.

## II.ການເຄື່ອນໄຫວຂອງ ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ

**1) ຄຕພ ປາຖະກະຖາ ວັນເກີດ ປະທານ ສຸພານຸວົງ ຄົບຮອບ 115 ປີ ແລະ ເຜີຍແຜ່ມະຕິ 8 ສະໄໝທີ XI**



ວັນທີ 17/7/2024, ພິທີປາຖະກະຖາ ໃຫ້ກຽດເຜີຍແຜ່ໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າ ຄຕພ ຊຶ່ງມີບັນດາຄະນະບໍລິຫານງານພັກ ສະມາຊິກພັກ ຕະຫຼອດຮອດພະນັກງານວິຊາການ ເຂົ້າຮ່ວມ 81 ສະຫາຍ. ສະຫາຍ ທອງສະຫວັນ ໄດ້ຍົກໃຫ້ເຫັນເຖິງຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງຂອງ ປະທານ ສຸພານຸວົງ ຕິດພັນກັບຂະບວນການປະຕິວັດ, ມີຈິດໃຈສາກົນອັນຜ່ອງໃສ, ມີຄວາມຈົ່ງຮັກພັກດີ, ອົງອາດກ້າຫານ. ຄຸນງາມຄວາມດີ ແລະ ຄວາມເປັນແບບຢ່າງຂອງເພິ່ນໄດ້ກາຍເປັນບົດຮຽນອັນລ້ຳຄ່າໃຫ້ຄົນຮຸ່ນຫຼັງ. ນອກນີ້ ສະຫາຍ ທອງສະຫວັນ ກໍໄດ້ເຜີຍແຜ່ມະຕິກອງປະຊຸມຄົບຄະນະບໍລິຫານງານພັກ ຄັ້ງທີ 8 ເຊິ່ງໄດ້ຍົກໃຫ້ເຫັນເຖິງການຕີລາຄາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ, ການຈັດຕັ້ງປະຕິບັດ ສອງວາລະແຫ່ງຊາດ; ການປະຕິຮູບລັດວິສາຫະກິດ; ຕີລາຄາ ກ່ຽວກັບຂະບວນຍຸຕິທຳ; ການປັບປຸງຄຸນນະພາບການສຶກສາ ແລະ ກຽມເອກະສານຕົ້ນຕໍ ຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.

2) **ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອໍາລາຂອງ ສະຫາຍ ຫງວຽນ ບ໋າ ຮຸ່ງ, ເອກອັກຄະລັດຖະທູດວິສາມັນຜູ້ອໍານາດເຕັມ ແຫ່ງ ສສ ຫວຽດນາມ ປະຈໍາ ສປປ ລາວ.**



ວັນທີ 22/7/2024, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອໍາລາຂອງ ສະຫາຍ ຫງວຽນ ບ໋າ ຮຸ່ງ, ເອກອັກຄະລັດຖະທູດວິສາມັນຜູ້ອໍານາດເຕັມ ແຫ່ງ ສສ ຫວຽດນາມ ປະຈໍາ ສປປ ລາວ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສໍາເລັດອັນໃຫຍ່ຫຼວງຕະຫຼອດໄລຍະ 7 ປີ ແຫ່ງການດໍາລົງຕໍາແໜ່ງເອກອັກຄະລັດຖະທູດ. ສະຫາຍ ທອງສະຫວັນ ພົມວິຫານ ຍັງໄດ້ສະແດງຄວາມຂອບໃຈ ຜ່ານ ສະຫາຍທູດ ຫງວຽນ ບ໋າ ຮຸ່ງ ໄປຍັງ ພັກ, ລັດຖະບານ ແລະ ປະຊາຊົນຫວຽດນາມ ທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສປປ ລາວ ໃນການສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນໄລຍະຜ່ານມາ ກໍຄື ການຊ່ວຍເຫຼືອໃນການເປັນປະທານໝູນວຽນອາຊຽນຂອງ ສປປ ລາວ ໃນປີ 2024. ສະຫາຍ ຫງວຽນ ບ໋າ ຮຸ່ງ ໄດ້ສະແດງຄວາມຂອບໃຈ ຕໍ່ ສະຫາຍ ທອງສະຫວັນ ພົມວິຫານ ກໍຄືຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ໃຫ້ການຮ່ວມມືສະໜັບສະໜູນ ແລະ ຊ່ວຍເຫຼືອ ຕະຫຼອດໄລຍະເວລາປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ດ້ວຍຜົນສໍາເລັດອັນຈົບງາມ.

3) **ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ເອກອັກຄະລັດຖະທູດ ສປ ຈີນ ປະຈໍາ ສປປ ລາວ ຄົນໃໝ່**



ວັນທີ 10/7/2024, ທີ່ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ), ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າ ຄຕພ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ນາງ ຟາງຫົງ, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມແຫ່ງ ສປ.ຈີນ ປະຈໍາ ສປປ.ລາວ ຄົນໃໝ່. ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ ສະຫາຍ ນາງ ຟາງຫົງ ທີ່ໄດ້ຖືກແຕ່ງຕັ້ງມາດໍາລົງຕໍາແໜ່ງເປັນ ເອກອັກຄະລັດຖະທູດ ສປ ຈີນ ປະຈໍາ ສປປ ລາວ, ພ້ອມທັງໄດ້ແຈ້ງສະພາບພື້ນເດັ່ນພາຍໃນ ສປປ ລາວ ໃຫ້ຊາບ ແລະ ຕີລາຄາສູງ ຕໍ່ສາຍພົວພັນການຮ່ວມມື ລະຫວ່າງ ພັກ, ລັດ ສປປ ລາວ ແລະ ພັກ, ລັດ ສປ ຈີນ ໃນໄລຍະທີ່ຜ່ານມາ. ສອງຝ່າຍເຫັນດີ ຈະສືບຕໍ່ໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກ ໃນການປະຕິບັດໜ້າທີ່ການທູດ ເພື່ອພ້ອມກັນສືບຕໍ່ເຮັດໜ້າທີ່ເປັນຂົວຕໍ່ ແຫ່ງການເສີມຂະຫຍາຍ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ໃຫ້ຈະເລີນງອກງາມຍິ່ງໆຂຶ້ນ.

4) ທ່ານ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ເອກອັກຄະຣາຊະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ຍີ່ປຸ່ນ ປະຈໍາ ສປປ ລາວ ຄົນໃໝ່



ວັນທີ 29/7/2024, ທີ່ ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ), ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າ ຄຕພ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ໂຄອິຊຶມິ ຊຶໂຕມຸ (Tsutomu Koizumi), ເອກອັກຄະຣາຊະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ຍີ່ປຸ່ນ ປະຈໍາ ສປປ ລາວ ຄົນໃໝ່. ໃນໂອກາດນີ້, ທ່ານ ທອງສະຫວັນ ໄດ້ສະແດງຄໍາຕ້ອນຮັບຊົມເຊີຍ ແລະ ແຈ້ງສະພາບການພັດທະນາປະເທດ ແລະ ການຮ່ວມມືຂອງລາວ-ຍີ່ປຸ່ນ ໃນໄລຍະ ຜ່ານມາ 70 ປີ ແຫ່ງສາຍພົວພັນ ລາວ-ຍີ່ປຸ່ນ ແລະ 10 ປີ ການເປັນຄູ່ຮ່ວມມືຍຸດທະສາດ ລາວ-ຍີ່ປຸ່ນ ແລະ ສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຂອງຍີ່ປຸ່ນໃນໄລຍະຜ່ານມາ ແລະ ໄດ້ແຈ້ງໃຫ້ທ່ານທູດຊາບເຖິງພາລະບົດບາດຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ໃນການເປັນເສນາທິການໃຫ້ສູນກາງພັກໃນວຽກງານຕ່າງປະເທດຂອງພັກ ແລະ ການທູດປະຊາຊົນຂອງພັກ. ໃນໂອກາດນີ້ ທ່ານ ທູດ ໄດ້ໃຫ້ຄໍາໝັ້ນສັນຍາຈະເຮັດສຸດຄວາມສາມາດຂອງຕົນ ໃນການສືບຕໍ່ເສີມຂະຫຍາຍ ແລະ ຮັດແໜ້ນການພົວພັນຮ່ວມມື ຍີ່ປຸ່ນ-ລາວ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຍິນດີສືບຕໍ່ເຮັດວຽກຮ່ວມກັບພາກສ່ວນຕ່າງໆຂອງ ສປປ ລາວ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນຮ່ວມມືທີ່ດີ ລະຫວ່າງ ສອງປະເທດ ຍີ່ປຸ່ນ-ລາວ.

5) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ຮອງລັດຖະມົນຕີຕ່າງປະເທດ ແລະ ການຄ້າອິດສະຕຣາລີ.



ວັນທີ 6/6/2024, ທີ່ ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ), ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າ ຄຕພ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ນາງ ມິກເຊວ ຈັນ, ຮອງລັດຖະມົນຕີກະຊວງການຕ່າງປະເທດ ແລະ ການຄ້າອິດສະຕຣາລີ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ໃນລະຫວ່າງ ວັນທີ 6-8/6/2024. ສອງຝ່າຍ ໄດ້ເອກະພາບ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ອົດສະຕຣາລີ, ອົດສະຕຣາລີ-ລາວ ໃນຕະຫຼອດໄລຍະ 70 ກວ່າປີຜ່ານມາ ທີ່ໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍຢ່າງຕໍ່ເນື່ອງ, ໂດຍສະເພາະ ການຍົກລະດັບການພົວພັນສອງປະເທດຂຶ້ນເປັນ ຄູ່ຮ່ວມມືແບບກວມລວມ; ການສ້າງຕັ້ງສະມາຄົມມິດຕະພາບ ລາວ-ອົດສະຕຣາລີ, ອົດສະຕຣາລີ-ລາວ ໃນການເຮັດບົດບາດການທູດປະຊາຊົນ ເພື່ອສະໜັບສະໜູນການພົວພັນດ້ານລັດຂອງສອງປະເທດໃຫ້ມີປະສິດທິຜົນຍິ່ງໆຂຶ້ນ. ສົ່ງເສີມການໄປມາຫາສູ່ກັນລະຫວ່າງ ປະຊາຊົນ ສອງຊາດ ແລະ ຊຸກຍູ້ການຮ່ວມມືໃນຂະແໜງເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ວັດທະນະທໍາ ແລະ ການທ່ອງທ່ຽວ ເພື່ອນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ເພື່ອປະກອບສ່ວນເຂົ້າໃນພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມືພັດທະນາ ໃນພາກພື້ນ ແລະ ໃນໂລກ.

### 6) ຄະນະຜູ້ແທນ ພັກ ປປ ລາວ ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືສາກົນ ລະຫວ່າງ ພັກການເມືອງ BRICS




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືສາກົນ, ກອງປະຊຸມຄົບຄະນະລະຫວ່າງ ພັກການເມືອງ BRICS ແລະ ພັກການເມືອງໃນບັນດາປະເທດຄູ່ຮ່ວມມື ພາຍໃຕ້ຫົວຂໍ້: “ສ່ວນໃຫຍ່ໃນໂລກ ເພື່ອໂລກຫຼາຍຂົ້ວ” (World Majority for a Multipolar World), ຄຽງຄູ່ກັບ ກອງປະຊຸມຄະນະປະຈຳຂອງເວທີປຶກສາຫາລື “ເພື່ອເສລີພາບ ຂອງບັນດາຊາດ" ແລະ ການປຶກສາຫາລື “ໂຕະມົນ” ລະຫວ່າງ ພັກການເມືອງຂອງປະເທດອາຊຽນ-ຣັດເຊຍ ໃນລະຫວ່າງວັນທີ 16-19/7/2024 ທີ່ເມືອງວາລາດີໂວສຕົກ ສະຫະພັນຣັດເຊຍ, ໂດຍການເປັນເຈົ້າພາບຂອງພັກຣັດເຊຍເອກະພາບ, ມີຄະນະຜູ້ແທນຈາກພັກການເມືອງ ຫຼາຍກວ່າ 150 ພັກ ຈາກ 32 ປະເທດ ເຂົ້າຮ່ວມ. ກອງປະຊຸມ ໄດ້ລົງເລິກແລກປ່ຽນ ກ່ຽວກັບ ຄວາມໝັ້ນຄົງໃນດ້ານຕ່າງໆ ແລະ ບັນຫາເພື່ອສັນຕິພາບໃນໂລກ; ເສີມຂະຫຍາຍສາຍພົວພັນດ້ານເສດຖະກິດ ແລະ ການເງິນ ລະຫວ່າງບັນດາປະເທດສ່ວນໃຫຍ່ໃນໂລກ ອັນເປັນພື້ນຖານໃນການສ້າງລະບຽບໂລກໃຫມ່ທີ່ຍຸຕິທຳ ແລະ ສະເໝີພາບ; ການຢູ່ຮ່ວມກັນໂດຍສັນຕິຂອງບັນດາລັດທີ່ມີຄວາມແຕກຕ່າງທາງດ້ານການເມືອງ ແລະ ສັງຄົມ ແລະ ຄວາມຮັບຜິດຊອບຂອງບັນດາພັກການເມືອງໃນໂລກ ໃນສະພາບການຫັນເປັນລະບົບຕົວເລກ (digital) ຢ່າງໄວວາ.

ໃນໂອກາດນີ້, ຫົວໜ້າຜູ້ແທນພັກ ປປ.ລາວ ໄດ້ມີຄຳເຫັນຮຽກຮ້ອງໃຫ້ບັນດາກຳລັງການເມືອງທີ່ຮັກຫອມສັນຕິພາບ ຕ້ອງຍົກສູງບົດບາດຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການ; ເພີ່ມທະວີຄວາມສາມັກຄີ ແລະ ການຮ່ວມມືໃນແຕ່ລະດ້ານ, ສະໜັບສະໜູນເຊິ່ງກັນ ແລະ ກັນ ບົນຫຼັກການຢູ່ຮ່ວມກັນໂດຍສັນຕິ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ສຸມຄວາມພະຍາຍາມຮ່ວມກັນ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມືຫຼາຍຝ່າຍ ເພື່ອການສ້າງໂລກຫຼາຍຂົ້ວທີ່ມີຄວາມສະເໝີພາບ ແລະ ເທົ່າທຽມ ຊຶ່ງມີຄວາມຈຳເປັນ ແລະ ຂາດບໍ່ໄດ້ ສຳລັບບັນດາປະເທດທີ່ພັດທະນາ ແລະ ກຳລັງພັດທະນາ; ສືບຕໍ່ຕ້ານລັດທິຈັກກະພັດນິຍົມ, ລັດທິລ່າເມືອງຂຶ້ນແບບໃໝ່ໃນສະໄໝໃໝ່ ເພື່ອປົກປັກຮັກສາສັນຕິພາບ, ຄວາມໝັ້ນຄົງ ແລະ ນຳເອົາຄວາມສົມບູນພູນສຸກມາສູ່ພາກພື້ນ ແລະ ທົ່ວໂລກ. ພັກ ປປ ລາວ ເຊື່ອໝັ້ນວ່າ BRICS ຈະສາມາດເປັນກົນໄກໜຶ່ງທີ່ສຳຄັນຊຸກຍູ້ກສ້າງຄວາມເຂັ້ມແຂງໃຫ້ແກ່ການຮ່ວມມືຫຼາຍຝ່າຍ ເພື່ອສົ່ງເສີມການພັດທະນາ ແລະ ຄວາມໝັ້ນຄົງຂອງໂລກ ແລະ ເພື່ອຕ້ານລັດທິຝ່າຍດຽວໃນຕໍ່ໜ້າ.

### 7) ຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມ “ສະໂມສອນເພື່ອນຣັດເຊຍ” ຜ່ານຮູບແບບວິດີໂອທາງໄກ.




ວັນທີ 18/7/2024, ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມ “ສະໂມສອນເພື່ອນຣັດເຊຍ” ພາຍໃຕ້ຫົວຂໍ້ “ການພົວພັນກັນໃນໂລກ: ການພົວພັນແລກປ່ຽນ ລະຫວ່າງ ອະລິຍະທຳ ແລະ ວັດທະນະທຳ ອັນເປັນພື້ນຖານຂອງການຢູ່ຮ່ວມກັນໂດຍສັນຕິ ຂອງບັນດາປະເທດ” (Face to Face with the world: Intercivilizational and Intercultural dialogue as a basis for peaceful coexistence of states) ໂດຍການເປັນເຈົ້າພາບຂອງພັກຣັດເຊຍເອກະພາບ, ມີຄະນະຜູ້ແທນຈາກ 25 ປະເທດ ເຂົ້າຮ່ວມ.

ສະຫາຍ ທອງສະຫວັນ ໄດ້ມີຄຳເຫັນ ຕີລາຄາສູງ ແລະ ຊົມເຊີຍຕໍ່ເຈົ້າພາບຈັດກອງປະຊຸມໃນແນວຄິດລິເລີ່ມດັ່ງກ່າວ: ສະຫາຍ ທອງສະຫວັນ ໄດ້ຍົກໃຫ້ເຫັນການພັດທະນາອະລິຍະທຳຂອງພາກພື້ນອາຊີ-ປາຊີຟິກ ໃນຂອບອາຊຽນ ກໍຄືອະລິຍະທຳຂອງປະເທດລາວ ທີ່ໄດ້ຮັບການພັດທະນາມາແຕ່ສະໄໝບູຮານ ເພື່ອເຊື່ອມໂຍງວັດທະນະທຳ ແລະ ສິລະປະ ສູ່ສັນຕິພາບ ແລະ ການພັດທະນາໃນພາກພື້ນ. ພັກ ປປ ລາວ ໄດ້ໃຫ້ຄວາມສຳຄັນຢ່າງຍິ່ງໃນການເສີມຂະຫຍາຍຄຸນຄ່າທາງວັດທະນະທຳທີ່ເປັນເອກະລັກຂອງຊາດ ແລະ ພັດທະນາຄວາມສີວິໄລດ້ານຈິດໃຈຂອງສັງຄົມຢ່າງບໍ່ຢຸດຢັ້ງ; ຖືເອົາການສ້າງຄວາມຈະເລີນດ້ານເສດຖະກິດ ຄຽງຄູ່ກັບການສ້າງຄວາມສີວິໄລ ດ້ານຈິດໃຈ; ເພື່ອພັດທະນາປະເທດຊາດໃຫ້ຍືນຍົງ ແລະ ໝັ້ນຄົງ. ພັກ ປປ ລາວ ໄດ້ມີນະໂຍບາຍ ເພື່ອອະນຸລັກ, ສົ່ງເສີມ ແລະ ພັດທະນາວັດທະນະທຳຂອງຊາດ, ອະນຸລັກຟື້ນຟູບັນດາມໍລະດົກວັດທະນະທຳທາງວັດຖຸ ແລະ ນາມມະທຳ; ເອົາໃຈໃສ່ເຜີຍແຜ່ບັນດາຄຸນຄ່າດ້ານຈິດໃຈທີ່ກ້າວໜ້າໃນຍຸກສະໄໝ. ຍົກລະດັບການພັດທະນາວັດທະນະທຳອັນດີງາມໃຫ້ສູງຂຶ້ນ ແລະ ກົມກືນກັບຍຸກສະໄໝ; ສະແດງຄວາມໝາຍໝັ້ນຂອງພັກ ປປ ລາວ ໃນການສືບຕໍ່ປົກສາຫາລື ແລະ ຮ່ວມມືກັບບັນດາພັກການເມືອງ ກໍຄື ບັນດາປະເທດເພື່ອນມິດ ເພື່ອສົ່ງເສີມການພົວພັນແລກປ່ຽນ ລະຫວ່າງບັນດາອະລິຍະທຳ ແລະ ວັດທະນະທຳ ຂອງບັນດາປະເທດຕ່າງໆ ເພື່ອສັນຕິພາບ, ຄວາມໝັ້ນຄົງ, ມິດຕະພາບ, ການຮ່ວມມືເພື່ອການພັດທະນາ, ຄວາມຈະເລີນຮຸ່ງເຮືອງ ແລະ ການຢູ່ຮ່ວມກັນໂດຍສັນຕິຂອງບັນດາປະຊາຊາດໃນໂລກ.

**8) ຫົວໜ້າ ຄຕພ ຕ້ອນຮັບ ເອກອັກຄະລັດຖະທູດ ສ.ໂບລິວາຣຽນ ເວເນຊູເອລາ ຄົນໃໝ່.**



ວັນທີ 03/7/2024, ທີ່ ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ), ສະຫາຍ ທອງສະຫວັນ ພົມວິຫານກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ຮວງ ກາຣໂລດສ ເຟຣນັງເດັດສ ຮົວເຣັດສ໌ (Juan Carlos Fernandes Juárez), ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງສາທາລະນະລັດ ໂບລິວາຣຽນ ເວເນຊູເອລາ ຄົນໃໝ່ ປະຈຳ ສປປ ລາວ ທີ່ມີສຳນັກງານສະຖານທູດ ຕັ້ງຢູ່ນະຄອນຫຼວງຮ່າໂນ້ຍ, ສສ. ຫວຽດນາມ. ໃນໂອກາດນີ້, ທັງສອງຝ່າຍເຫັນດີ ສືບຕໍ່ຊຸກຍູ້ການພົວພັນຮ່ວມມືດ້ານພັກ, ລັດ ກໍຄື ການທູດປະຊາຊົນ ໃຫ້ຫຼາຍຂຶ້ນ ແລະ ກ້າວໄປສູ່ການເຊັນ MOU ຮ່ວມກັນ, ສຶກສາຄວາມເປັນໄປໄດ້ເຖິງທ່າແຮງບົ່ມຊ້ອນ ເພື່ອສົ່ງເສີມການຮ່ວມມື ໃນຂະແໜງການຕ່າງໆ ເຊັ່ນ: ຂົງເຂດການຄ້າ, ການລົງທຶນ, ການສຶກສາ, ກະສິກຳ, ວັດທະນະທຳ, ທ່ອງທ່ຽວ, ບໍ່ແຮ່ ແລະ ອື່ນໆ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດໃຫ້ຂະຫຍາຍຕົວຍິ່ງໆຂຶ້ນ.

**9) ຫົວໜ້າ ຄຕພ ຕ້ອນຮັບ ທ່ານ ປອ. ໂທບີອັດສ ລິນເນີ , ຮອງ ລມຕ ຕ່າງປະເທດເຢຍລະມັນ.**



ວັນທີ 03/6/2024, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ປອ. ໂທບີອັດສ ລິນເນີ (Dr. Tobias Lindner), ຮອງ

ລັດຖະມົນຕີກະຊວງການຕ່າງປະເທດເຢຍລະມັນ ໃນໂອກາດຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ. ໃນໂອກາດນີ້, ທ່ານ ໂທບີອັດສ ລິນເນີ ກ່າວບາງຕອນວ່າ: ເຢຍລະມັນ ຈະສືບຕໍ່ສະໜັບສະໜູນຄວາມເປັນແກນກາງຂອງອາຊຽນ, ການຮ່ວມມືດ້ານເສດຖະກິດໃນພາກພື້ນອາຊີ, ອາຊຽນ ແລະ ມີຄວາມຍິນດີເຮັດວຽກຮ່ວມກັບ ສປປ ລາວ ເພື່ອໃຫ້ການເປັນປະທານໝູນວຽນອາຊຽນ ໃນປີ 2024 ປະສົບຜົນສຳເລັດຢ່າງຈົບງາມ. ເຫັນດີເປັນເອກະພາບໃນການຮ່ວມມືແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ດ້ວຍການນຳເອົາຍຸດທະສາດໃນການຫັນປະເທດລາວທີ່ບໍ່ມີຊາຍແດນຕິດຈອດກັບທະເລໃຫ້ເປັນປະເທດເຊື່ອມໂຍງເຊື່ອມຈອດ ເພື່ອຊຸກຍູ້ການຮ່ວມມືດ້ານເສດຖະກິດ-ການຄ້າ, ການລົງທຶນ ລະຫວ່າງລາວ ກັບ ເຢຍລະມັນ ກໍຄື ສະຫະພາບເອີຣົບ ໃຫ້ຫຼາຍຂຶ້ນກວ່າເກົ່າ ເພື່ອປະກອບສ່ວນເຂົ້າໃນພາລະກິດ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາແບບຍືນຍົງ ແລະ ຄວາມຜາສຸກຂອງປະຊາຊົນໃນພາກພື້ນ ແລະ ໃນໂລກ.

### 10) ຫົວໜ້າ ຄຕພ ຕ້ອນຮັບ ທ່ານ ນາງ ແຮັດເຕີ ໂຣຊ ວາເຣຍວາ ເອກອັກຄະລັດຖະທູດວິສາມັນ ສ. ອາເມຣິກາ



ວັນທີ 31/5/2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ), ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າ ຄຕພ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ນາງ ແຮັດເຕີ ໂຣຊ ວາເຣຍວາ (Heather Roach Variava), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ອາເມຣິກາ ຄົນໃໝ່ ປະຈຳ ສປປ ລາວ; ໄດ້ສະແດງຄວາມຊົມເຊີຍ ແລະ ເຊື່ອໝັ້ນວ່າ ການປະຕິບັດໜ້າທີ່ການທູດຂອງທ່ານ ຈະເປັນຂົວຕໍ່ເຮັດໃຫ້ສາຍພົວພັນ ແລະ ການຮ່ວມມື ລະຫວ່າງ ສປປ ລາວ ແລະ ສ. ອາເມຣິກາ ຂະຫຍາຍຕົວຂຶ້ນ ບົນພື້ນຖານແຫ່ງສາຍພົວພັນການທູດ ລາວ-ອາເມຣິກາ ຄົບຮອບ 69 ປີ ແລະ ເປັນຄູ່ຮ່ວມມືແບບກວມລວມ ລະຫວ່າງ ສອງປະເທດ ຄົບຮອບ 8 ປີ. ສ່ວນທ່ານ ທູດ ຢືນຢັນວ່າ ສະຖານເອກອັກຄະລັດຖະທູດ ສ. ອາເມຣິກາ ຈະສືບຕໍ່ປະກອບສ່ວນຊຸກຍູ້ ແລະ ຮັດແໜ້ນການພົວພັນຮ່ວມມືທາງດ້ານເສດຖະກິດ, ວັດທະນະທຳ ແລະ ສັງຄົມ ລະຫວ່າງ ສອງປະເທດ ໃຫ້ໄດ້ຮັບການຂະຫຍາຍຕົວຂຶ້ນ; ສະໜັບສະໜູນການເປັນປະທານໝູນວຽນ ກອງປະຊຸມສຸດຍອດ ອາຊຽນ ຂອງ ສປປ ລາວ ແລະ ປີທ່ອງທ່ຽວລາວ 2024, ສະແດງຄວາມຂອບໃຈຕໍ່ລັດຖະບານ ສປປ.ລາວ ໃນການປະຕິບັດນະໂຍບາຍມະນຸດສະທຳໃນໂຄງການ ຊອກຫາສິ່ງເສດເຫຼືອ ຂອງທະຫານ ອາເມຣິກາ ທີ່ຫາຍສາບສູນໃນປາງສົງຄາມ ຢູ່ ລາວ (MIA).

### 11) ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ຜູ້ແທນສະຫະພາບເອີຣົບ



ວັນທີ 07/6/2024, ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງທ່ານ ນາງ ປາວລາ ປໍາປາໂລນີ, ຮອງຫົວໜ້າກົມໃຫຍ່, ຫົວໜ້າກົມຮັບຜິດຊອບລວມຂົງເຂດອາຊີ-ປາຊີຟິກ, ປະຈຳສຳນັກງານການຕ່າງປະເທດເອີຣົບ ໃນໂອກາດຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ.ລາວ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍຕໍ່ການພັດທະນາ ແລະ ເສີມຂະຫຍາຍການພົວພັນລະຫວ່າງລາວ ແລະ ເອີຣົບ ຕະຫຼອດ 49 ປີ ຜ່ານມາ.

**12) ສະຫາຍ ຮອງຫົວໜ້າ ຄຕພ ພ້ອມດ້ວຍຄະນະ ເຂົ້າຮ່ວມພິທີວາງພວງມາລາ ແລະ ຂຽນປຶ້ມໄຫວ້ອາໄລ ສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງ ພັກກອມມູນິດຫວຽດນາມ**




ວັນທີ 25/7/2024, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ໄປວາງພວງມາລາ ແລະ ຂຽນປຶ້ມໄຫວ້ອາໄລເຖິງ ດວງວິນຍານ ສະຫາຍ ຫງວຽນ ຟູ ຈ້ອງ, ເລຂາທິ ການໃຫຍ່ ຄະນະບໍລິຫານງານສູນກາງ ພັກກອມມູນິດຫວຽດນາມ ຢູ່ ສະຖານເອກອັກຄະລັດຖະທູດ ຫວຽດນາມ ທີ່ນະຄອນຫຼວງວຽງຈັນ. ທີ່ໄດ້ເສຍຊີວິດ ໃນວັນທີ 19/7/2024 ຜ່ານມາ.

**13) ຄະນະຜູ້ແທນ ຄຕພ ຢ້ຽມຢາມ ແລະ ເຮັດວຽກຢູ່ ສສ ຫວຽດນາມ**



ຄະນະຜູ້ແທນ ຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ) ນໍາໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງ ຫົວໜ້າ ຄຕພ ໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ ສສ ຫວຽດນາມ ໃນລະຫວ່າງວັນທີ 15-17/7/2024. ໂອກາດນີ້, ຄະນະ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ເລ ຮວາຍ ຈູງ, ເລຂາທິການສູນກາງພັກ, ຫົວໜ້າ ຄະນະພົວພັນຕ່າງປະເທດສູນ ກາງພັກກອມມູນິດຫວຽດນາມ(ຄຕພ ຫວຽດນາມ). ສອງຝ່າຍ ຕີລາຄາສູງ ຕໍ່ໝາກຜົນຂອງການຮ່ວມມື ລະຫວ່າງ ສອງພັກສອງລັດ; ຢືນຢັນຈະສືບຕໍ່ປະຕິບັດບັນດາຂໍ້ຕົກລົງລະຫວ່າງການນໍາຂັ້ນສູງຂອງສອງພັກ, ຂໍ້ຕົກລົງການຮ່ວມ ມືລະຫວ່າງ ສອງ ຄຕພ ລາວ-ຫວຽດນາມ, ໃນຕອນເຊົ້າ ຂອງວັນດຽວກັນ, ຄະນະຜູ້ແທນ ໄດ້ພົບປະເຮັດວຽກກັບ ສະຫາຍ ຫງວຽນ ມິງ ເຕິມ, ຮອງຫົວໜ້າ ຄຕພ ຫວຽດນາມ ພ້ອມດ້ວຍຄະນະ. ສອງຝ່າຍໄດ້ລົງເລິກແລກປ່ຽນຄໍາ ຄິດເຫັນ ແລະ ຕີລາຄາສະພາບການທີ່ພົ້ນເດັ່ນຂອງພາກພື້ນ ແລະ ສາກົນ. ສອງຝ່າຍເຫັນດີສືບຕໍ່ແລກປ່ຽນຄະນະຜູ້ ແທນແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນ, ປະສານສົມທົບຢ່າງສະໜິດແໜ້ນໃນວຽກງານພົວພັນຕ່າງປະເທດ ກໍ່ ຄືໃນການຈັດຕັ້ງຜັນຂະຫຍາຍ ບັນດາຂໍ້ຕົກລົງຂັ້ນສູງຂອງສອງພັກ ແລະ ບັນດາສັນຍາການຮ່ວມມື ລະຫວ່າງ ສອງ ປະເທດ ລາວ-ຫວຽດນາມ ໃຫ້ບັນລຸຜົນສໍາເລັດຕາມແຜນການທີ່ວາງໄວ້.

## III.ການເຄື່ອນໄຫວຂອງ 3 ອົງການຈັດຕັ້ງມະຫາຊົນ ຄະນະພົວພັນຕ່າງປະເທດສູນກາງພັກ.

**1. ພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ.**



ວັນທີ 31/5/2024, ທີ່ສໍານັກງານຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ) ໄດ້ຈັດພິທີສະເຫຼີມສະຫຼອງ ວັນເດັກນ້ອຍສາກົນ ວັນທີ 01/6/2024 ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຄົບຮອບ 44 ປີ, ເຊິ່ງໃນພິທີດັ່ງກ່າວ ເປັນ ກຽດເຂົ້າຮ່ວມໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ ຄະນະພົວພັນຕ່າງປະເທດສູນກາງພັກ, ຫົວໜ້າ ຄຕພ ແລະ ສະຫາຍ ນາງ ສີຣິພອນ ຄູຫາເທບ, ປະທານສະຫະພັນ

ແມ່ຍິງຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍ ພັນລະຍາການນຳ, ພໍ່ແມ່, ຜູ້ປົກຄອງ, ລູກຫຼານຂອງ ພະນັກງານຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

**2. ສະຫະພັນແມ່ຍິງຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເຂົ້າຢ້ຽມຊົມຫໍມູນເຊື້ອແມ່ຍິງລາວ**



ເພື່ອເປັນການລະນຶກເຖິງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 69 ປີ (20/7/1955 – 20/7/2024) ພ້ອມທັງເປັນການສ້າງຂະບວນການ ເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ຈະມາເຖິງນີ້. ໃນວັນທີ 23/7/2024 ສະຫະພັນແມ່ຍິງຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເຂົ້າຢ້ຽມຊົມຫໍມູນເຊື້ອແມ່ຍິງລາວ, ທີ່ສູນຝຶກອົບຮົມແມ່ຍິງລາວ; ມີຄະນະບໍລິຫານງານ, ພ້ອມດ້ວຍສະມາຊິກເອື້ອຍນ້ອງແມ່ຍິງ, ຕາງໜ້າຊາວໜຸ່ມ ແລະ ກຳມະບານ ຄຕພ ເຂົ້າຮ່ວມ 22 ສະຫາຍ.

**3. ກອງປະຊຸມໃຫຍ່ ຄັ້ງທີ II ຂອງ ໜ່ວຍແມ່ຍິງ ກົມ ຄຄພ ແລະ ກົມ ອປອ**



ວັນທີ 18/6/2024, ໜ່ວຍແມ່ຍິງກົມ ຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ (ຄຄພ) ແລະ ກົມອາຊີ-ປາຊີຟິກ ແລະ ອາຟຣິກາ (ອປອ) ໄດ້ດຳເນີນກອງປະຊຸມໃຫຍ່ສະມາຊິກແມ່ຍິງ ຄັ້ງທີ II ຂຶ້ນ ທີ່ສຳນັກງານ ຄຕພ. ກອງປະຊຸມໄດ້ຜ່ານ ບົດລາຍງານການເມືອງ ແລະ ບົດສຳຫຼວດການນຳພາ ຂອງ ຄະນະໜ່ວຍແມ່ຍິງກົມ ຄຄພ-ອປອ ສະໄໝທີ I, ເຊິ່ງໄດ້ຕີລາຄາຜົນສຳເລັດ, ຈຸດດີ-ຈຸດຄົງຄ້າງ, ຂໍ້ສະດວກ-ຂໍ້ຫຍຸ້ງຍາກ ໃນການນຳພາ-ຊີ້ນຳວຽກງານແມ່ຍິງຂອງກົມ ຄຄພ-ອປອ ໃນໄລຍະ 5 ປີຜ່ານມາ ແລະ ທິດທາງຕໍ່ໜ້າ. ກອງປະຊຸມ ໄດ້ເລືອກຕັ້ງເອົາຄະນະໜ່ວຍຊຸດ ໃໝ່ເຊິ່ງປະກອບມີ ສະຫາຍ ນ.ສຳລອງ ທຳມະໂນລາດ ເປັນຫົວໜ້າໜ່ວຍ; ສະຫາຍ ນ. ທິດາສະຫວັນ ພັນທະວົງ, ເປັນຮອງຫົວໜ້າໜ່ວຍ, ທັງເປັນປະທານກວດກາໜ່ວຍ ແລະ ສະຫາຍ ນ. ສຸລິພອນ ມັງໜໍ່ເມກ, ເປັນກຳມະການ.

**4. ກອງປະຊຸມໃຫຍ່ ຄັ້ງທີ II ຂອງ ໜ່ວຍແມ່ຍິງ ກົມການທູດປະຊາຊົນ ແລະ ກົມເອີຣົບ-ອາເມຣິກາ, ຄຕພ**



ວັນທີ 16/7/2024, ໜ່ວຍແມ່ຍິງກົມການທູດປະຊາຊົນ ແລະ ກົມເອີຣົບ-ອາເມຣິກາ ໄດ້ດຳເນີນກອງປະຊຸມໃຫຍ່ ຄັ້ງທີ II ທີ່ສຳນັກງານ ຄຕພ ພາຍໃຕ້ການເປັນປະທານຂອງ ສະຫາຍ ບຸນຍອງ ບຸດທະວົງ ເລຂາໜ່ວຍພັກກົມ ທປຊ ແລະ ສະຫາຍ ນ. ສິຣິພອນ ຄູຫາເທບ, ປະທານສະຫະພັນແມ່ຍິງ ຄຕພ, ເລຂາໜ່ວຍພັກກົມ ອອ; ຕາງໜ້າບັນດາໜ່ວຍແມ່ຍິງອ້ອມຂ້າງພາຍໃນ ຄຕພ, ຕາງໜ້າໜ່ວຍຊາວໜຸ່ມ ແລະ ກຳມະບານຂອງກົມ ທປຊ-ອອ ແລະ ສະມາຊິກແມ່ຍິງກົມ ທປຊ-ອອ ເຂົ້າຮ່ວມ. ກອງປະຊຸມໄດ້ຜ່ານ ບົດລາຍງານການເມືອງ ແລະ ບົດສຳຫຼວດການນຳພາ ຂອງ ຄະນະໜ່ວຍແມ່ຍິງກົມ ທປຊ-ອອ ສະໄໝທີ I ແລະ ທິດທາງໃນຕໍ່ໜ້າ. ກອງປະຊຸມໄດ້ປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊຸດໃໝ່ ເຊິ່ງປະກອບມີ ສະຫາຍ ນ ສົມປາດຖະໜາ ວົງປະຊາ, ເປັນຫົວໜ້າໜ່ວຍ; ສະຫາຍ ນ ດາວພະສຸກ ທຳມະໂກດ, ເປັນຮອງຫົວໜ້າໜ່ວຍ, ທັງເປັນປະທານກວດກາໜ່ວຍ ແລະ ສະຫາຍ ນ ລັດຕະນະ ຫຼວງລາດ ເປັນກຳມະການໜ່ວຍແມ່ຍິງກົມ ທປຊ-ອອ.

**5. ກອງປະຊຸມໃຫຍ່ ຄັ້ງທີ II ຂອງ ໜ່ວຍຊາວໜຸ່ມ ກົມອາຊີ-ປາຊີຟິກ ແລະ ອາຟຣິກາ**



ວັນທີ 11/6/2024, ໜ່ວຍຊາວໜຸ່ມກົມອາຊີ-ປາຊີຟິກ ແລະ ອາຟຣິກາ (ອປອ) ໄດ້ດຳເນີນກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມ ຄັ້ງທີ II ຂຶ້ນ ທີ່ສຳນັກງານ ຄຕພ. ກອງປະຊຸມໄດ້ຜ່ານ ບົດລາຍງານການເມືອງ ແລະ ບົດສຳຫຼວດການນຳພາ ຂອງ ຄະນະໜ່ວຍຊາວໜຸ່ມກົມ ສະໄໝທີ I, ເຊິ່ງໄດ້ຕີລາຄາຜົນສຳເລັດ, ຈຸດດີ-ຈຸດຄົງຄ້າງ, ຂໍ້ສະດວກ-ຂໍ້ຫຍຸ້ງຍາກ ໃນການນຳພາ-ຊີ້ນຳວຽກງານຊາວໜຸ່ມຂອງກົມ ໃນໄລຍະ 5 ປີຜ່ານມາ ແລະ ທິດທາງຈຸດສຸມໃນໄລຍະ 5 ປີຕໍ່ໜ້າ. ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມ ກົມ ອປອ ຄັ້ງທີ II ໄດ້ປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊຸດໃໝ່ ເຊິ່ງປະກອບມີ ສະຫາຍ ຄອນສະໄໝ ໄຊຍະຈັກ, ເປັນເລຂາໜ່ວຍ; ສະຫາຍ ເພັດອຸໄທ ເພຍໄຊ, ເປັນຮອງເລຂາ, ທັງເປັນປະທານກວດກາໜ່ວຍ ແລະ ສະຫາຍ ສົມໄພ ສຸພານີ, ເປັນກຳມະການໜ່ວຍຊາວໜຸ່ມກົມ ອປອ.

**6. ກອງປະຊຸມໃຫຍ່ ຄັ້ງທີ II ຂອງ ສະມາຊິກຊາວໜຸ່ມ ໜ່ວຍຮາກຖານກົມເອີຣົບ-ອາເມຣິກາ**



ວັນທີ 26/6/2024, ໜ່ວຍຊາວໜຸ່ມກົມເອີຣົບ-ອາເມຣິກາ(ອອ), ຄຕພ ໄດ້ຈັດກອງປະຊຸມໃຫຍ່ ຄັ້ງທີ II ຂອງຕົນ ທີ່ສຳນັກງານ ຄຕພ. ກອງປະຊຸມໄດ້ຜ່ານ ບົດລາຍງານການເມືອງ ແລະ ບົດສຳຫຼວດການນຳພາ ຂອງ ຄະນະໜ່ວຍຊາວໜຸ່ມກົມ ອອ ສະໄຫມທີ I, ເຊິ່ງໄດ້ຕີລາຄາຜົນສຳເລັດ, ຈຸດດີ-ຈຸດຄົງຄ້າງ, ຂໍ້ສະດວກ-ຂໍ້ຫຍຸ້ງຍາກ ໃນການຊີ້ນຳ-ນຳພາວຽກງານຊາວໜຸ່ມຂອງກົມ ໃນໄລຍະ 5 ປີ ຜ່ານມາ ແລະ ແຜນການຈຸດສຸມໃນໄລຍະ 5 ປີຕໍ່ໜ້າ. ກອງປະຊຸມໃຫຍ່ ໄດ້ປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊຸດໃໝ່, ເຊິ່ງປະກອບມີ 03 ສະຫາຍຄື: ສະຫາຍ ຄູນແກ້ວ ດວງນາລີ, ເປັນເລຂາໜ່ວຍ; ສະຫາຍ ທະນູໄຊ ເຫງົ້າວົງສີ, ເປັນຮອງເລຂາ ທັງເປັນປະທານກວດກາໜ່ວຍ ແລະ ສະຫາຍ ນ. ລັດສະດາພອນ ພຸດທະວົງ, ເປັນກຳມະການໜ່ວຍ.